ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ

ກອງທຶນຫລຸດຜ່ອນຄວາມທຸກຍາກ (ຫລຍ)

ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາການ (LONG)





# ປື້ມຄູ່ມື

## ການສ້າງຕັ້ງກຸ່ມທ້ອນ ເງິນຂັ້ນບ້ານ





ທ້ອນເງິນໃນວັນນີ້ ເພື່ອອະນາຄົດທີ່ດີຂອງລູກຫລານໃນວັນໜ້າ

ກໍລະກົດ 2014

# ປື້ມຄູ່ມື

## ການສ້າງຕັ້ງກຸ່ມທ້ອນເງິນຂັ້ນບ້ານ

ຈັດພິມໂດຍ: ກອງທຶນຫລຸດຜ່ອນຄວາມທຸກຍາກ

ຮຽບຮຽງໂດຍ: ຈອນຈິດ ດວງພະຈັນ
ຜູ້ປະສານງານໂຄງການ ທລຍ/ຄປພ

ກຸ່ມເປົ້າໝາຍທີ່ນຳໃຊ້ປື້ມຄູ່ມືສະບັບນີ້:

- ພະນັກງານ ທລຍ/ຄປພ;
- ຜູ້ປະສານງານ ທລຍ/ຄປພ
- ຄະນະກຳມະການ

ສະບັບປັບປຸງຄັ້ງທີ II

ວັນທີຜະລິດ: 15 ກໍລະກົດ 2014

# ຄຳນຳ

ຫລາຍໆ ທ່ານ ທີ່ມີປະສົບການ ດ້ານການເງິນ ໄດ້ໃຫ້ຄຳ ອະທິບາຍໄວ້ວ່າ: ການສ້າງຕັ້ງກຸ່ມທ້ອນເງິນ ສາມາດຊ່ວຍຊາວບ້ານໃນເຂດຊົນນະບົດປະສົບຜົນສຳເລັດໃນການແກ້ໄຂຄວາມທຸກຍາກຂອງເຂົາເຈົ້າ. ສະນັ້ນ ໂຄງການປັບປຸງຊີວິດການເປັນຢູ່ເພື່ອຄ້ຳປະກັນດ້ານໂພສະນາການ ຄປພ (LONG) ທີ່ຢູ່ພາຍໃຕ້ການ ບໍລິຫານ ຄຸ້ມຄອງຂອງ ທລຍ ຈຶ່ງແມ່ນອີກໂຄງການໜຶ່ງ ຊຶ່ງເປັນໂຄງການທົດລອງ ແລະ ມີຈຸດປະສົງ ເພື່ອສ້າງຄວາມເຂັ້ມແຂງ ແລະຄວາມອາດສາມາດດ້ານການພັດທະນາ ເສດຖະກິດ-ສັງຄົມ ໃນເຂດຊົນນະບົດ ແລະ ຈະໃຊ້ຄວາມພະຍາຍາມສ້າງໃຫ້ຊາວບ້ານທີ່ທຸກຍາກຢູ່ບ້ານເປົ້າໝາຍສາມາດກຸ້ມຕົນເອງເພິ່ງຕົນເອງໄດ້ໃນລະດັບໃດໜຶ່ງຊຶ່ງຈະໃຊ້ໄລຍະເວລາໃນການຈັດຕັ້ງປະຕິບັດ 4 ປີ ຂ້າງໜ້ານີ້.

ດັ່ງນັ້ນ, ຂະບວນການສ້າງເສດຖະກິດ ໜຶ່ງເມືອງໜຶ່ງຜະລິດຕະພັນ ຫຼື ນະໂຍບາຍ ODOP ຂອງລັດຖະບານ ຈຶ່ງແມ່ນອີກເປົ້າໝາຍໜຶ່ງທີ່ ຄປພ ມີຄວາມຕ້ອງການນຳເອົາໄປເປັນບ່ອນອີງໃຫ້ ແກ່ຊາວບ້ານຜູ້ທີ່ມີຄວາມຕ້ອງການ ສ້າງຕັ້ງກຸ່ມທ້ອນເງິນຂອງຕົນເອງຂຶ້ນ ແລະ ຈະເປັນການສ້າງໂອກາດໃຫ້ຊາວບ້ານໄດ້ເຂົ້າເຖິງສະຖາບັນການເງິນໄດ້ຫລາຍຂຶ້ນ. ຖ້າຊາວບ້ານສາມາດເຂົ້າເຖິງສະຖາບັນການເງິນໄດ້ຊາວບ້ານກໍ່ຈະມີໂອກາດຍົກລະດັບລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຕົນເອງໄດ້ດີຂຶ້ນ ໂດຍສະໝັກໃຈປະກອບອາຊີບທຳການຜະລິດຂອງເຂົາເຈົ້າໃຫ້ໄດ້ຫຼາຍຂຶ້ນ, ໃນຂະນະດຽວກັນກໍ່ຈະສາມາດຜລິດໃຫ້ກາຍເປັນສິນຄ້າ ພອ້ມດຽວກັນນັ້ນ,ກຸ່ມເງິນທ້ອນຂອງຊາວບ້ານກໍ່ຈະໄດ້ກາຍເປັນກອງທຶນຂອງຊາວບ້ານໃນການກູ້ຢືມ ເພື່ອເປັນທຶນຮອນໃນການຜະລິດເພື່ອກຸ້ມກິນ ແລະ ກາຍເປັນສິນຄ້າ ຫລືສ້າງລາຍຮັບໃຫ້ແກ່ຄອບຄົວເພື່ອຫລຸດຜ່ອນຄວາມທຸກຍາກໃນຄອບຄົວກໍ່ຄືລະດັບບ້ານ.

ດັ່ງນັ້ນ, ຈຸດປະສົງຂອງການສ້າງປື້ມຄູ່ມືເຫລັ້ມນີ້ ແມ່ນເພື່ອຈະນຳເອົາໄປຝຶກອົບຮົມໃຫ້ກັບພະນັກງານ ຄປພ ແລະ ພະນັກງານຂະແໜງການກ່ຽວຂ້ອງຂັ້ນເມືອງ ແລະ ເຂົາເຈົ້າສືບຕໍ່ເອົາໄປນຳພາຊາວບ້ານຈັດຕັ້ງປະຕິບັດຕົວຈິງ ໃຫ້ຖືກຕ້ອງ ແລະມີຄວາມເປັນເອກະພາບກັນແຕ່ຕົ້ນ. ສະນັ້ນ, ປື້ມຄູ່ມື ເຫຼັ້ມນີ້ຈະປະກອບດ້ວຍ 7 ບົດ ຊຶ່ງລາຍລະອຽດ ທ່ານ ສາມາດອ່ານ ແລະ ສຶກສາເນື້ອໃນດັ່ງກ່າວໄດ້ໃນປື້ມເຫຼັ້ມນີ້ດ້ວຍຕົນເອງ, ແນ່ນອນວ່າ, ປື້ມຄູ່ມືສະບັບນີ້ ອາດຈະປັດສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ແລະ ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງຜູ້ນຳໃຊ້ໄດ້ທັງໝົດ, ເນື່ອງຈາກວ່າເປັນປື້ມຄູ່ມືທີ່ປັບປຸງມາຈາກຄູ່ມືການສ້າງຕັ້ງກຸ່ມທ້ອນເງິນຂອງພາຍໃນ ແລະ ຕ່າງປະເທດ. ແຕ່ເຖິງຢ່າງໃດກໍຕາມພວກເຮົາຫວັງວ່າຈະໄດ້ຮັບການປະກອບຄຳຄິດຄຳເຫັນ, ຄຳຕຳນິຕິຊົມຈາກທ່ານຜູ້ອ່ານ ແລະ ຜູ້ຊົມໃຊ້ທັງໝົດ, ເພື່ອພວກເຮົາຈະໄດ້ປັບປຸງແກ້ໄຂ ເຮັດໃຫ້ປື້ມຄູ່ມືດັ່ງກ່າວ ໄດ້ຮັບການພັດທະນາໃຫ້ດີຂຶ້ນ ໃນຂັ້ນຕໍ່ໄປ.

ນະຄອນຫລວງວຽງຈັນ, ວັນທີ 15 ກໍລະກົດ 2014

ຜູ້ອຳນວຍການບໍລິຫານການ ທລຍ

# ສາລະບານ


ຄຳນຳ ........ 2

ສາລະບານ ........ 3

ບົດທີ: 1 ........ 5

ຄວາມຮູ້ພື້ນຖານ ກ່ຽວກັບການສ້າງຕັ້ງກຸ່ມທ້ອນເງິນຂັ້ນບ້ານ ........ 5

1. ກຳນົດເວລາ: ........ 5

2. ຈຸດປະສົງ: ........ 5

3. ຜູ້ອຳນວຍຄວາມສະດວກ: ........ 5

4. ເຄື່ອງມື: ........ 5

5. ຮູບແບບການນຳສະເໜີ: ........ 5

ບົດທີ 2 ........ 11

ການສ້າງຕັ້ງກຸ່ມທ້ອນເງິນ ຂັ້ນບ້ານຕາມລະບຽບການຂອງ ຄປພ/LONG ........ 11

3. ຜູ້ອຳນວຍຄວາມສະດວກ: ........ 11

4. ເຄື່ອງມື: ........ 11

5. ຮູບແບບການນຳສະເໜີ: ຖາມ, ຕອບ ........ 11

ບົດທີ 3 ........ 22

ຄວາມສຳຄັນຂອງການຝາກເງິນທ້ອນ ........ 22

ບົດທີ 4 ........ 26

ການປ່ອຍເງິນໃຫ້ສະມາຊິກກຸ່ມ ກູ້ຢືມ ........ 26

ບົດທີ 5 ........ 30

ການເກັບກູ້ເງິນຄືນ ຈາກສະມາຊິກ ຂອງ ກຸ່ມທີ່ຢືມເງິນໄປ ........ 30

ບົດທີ 6 ........ 33

ບັນຊີສະຫລຸບເງິນສົດ ທີ່ມີຕົວຈິງ ແບບເປີດເຜີຍ ........ 33

ບົດທີ່ 7 ........ 37

ວິທີຄິດໄລ່ການແບ່ງປັນຜົນກຳໄລຕາມຫຸ້ນເງິນທ້ອນໃຫ້ສະມາຊິກແຕ່ລະຄົນ ........ 37

ປະເມີນຄວາມເຂົ້າໃຈຂອງນັກຝຶກອົບຮົມ ໃນ ........ 44

ພາກເອກະສານແນບທ້າຍ: ... 45

ໃບສະເໜີ ... 46

ຂໍ້ຕົກລົງຂອງທ່ານເຈົ້າເມືອງ ... 47

ວ່າດ້ວຍການອະນຸມັດແຕ່ງຕັ້ງກຸ່ມທ້ອນເງິນຂັ້ນບ້ານ ... 47

ຂໍ້ຕົກລົງແຕ່ງຕັ້ງ ... 48

ຄະນະບໍລິຫານງານກຸ່ມ ແລະ ຄະນະທີ່ປຶກສາ-ກວດກາ ກຸ່ມທ້ອນເງິນ ... 48

ໜ່ວຍຜະລິດຕະພັນຕ່າງໆ ຂອງບ້ານ ... 48

ໜັງສືສັນຍາກູ້ຢືມເງິນ ... 50

ໃບສະໝັກ ... 51

ຂໍເຂົ້າເປັນສະມາຊິກກຸ່ມທ້ອນເງິນ ... 51

# ບົດທີ: 1
# ຄວາມຮູ້ພື້ນຖານ ກ່ຽວກັບການສ້າງຕັ້ງກຸ່ມທ້ອນເງິນຂັ້ນບ້ານ

1. **ກຳນົດເວລາ:** 30 ນາທີ
2. **ຈຸດປະສົງ:**
   1) ເພື່ອໃຫ້ຊາວບ້ານຜູ້ເຂົ້າຮ່ວມມີຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບຄວາມສຳຄັນໃນການສ້າງຕັ້ງກຸ່ມທ້ອນເງິນ
   2) ປຸກລະດົມຊຸມຊົນເຂົ້າມາມີສ່ວນຮ່ວມໃນຂະບວນການທ້ອນເງິນ ດ້ວຍຄວາມສະໝັກໃຈ
3. **ຜູ້ອຳນວຍຄວາມສະດວກ:** 2 ທ່ານ
4. ເຄື່ອງມື:
   - ເຈັ້ຍແຜ່ນໃຫຍ່
   - ບິກຂຽນເຈັ້ຍແຜ່ນໃຫຍ່
   - ເທບຕິດເຈັ້ຍ



5. **ຮູບແບບການນຳສະເໜີ:**
   - ຖາມຜູ້ເຂົ້າຮ່ວມ:

     ເປັນຫຍັງຈຶ່ງມີຄວາມຈຳເປັນໃນການທອັນເງິນ ?

     ໃນເວລານັກສຳມະນາກອນ ຕອບ ຜູ້ອຳນວຍຄວາມສະດວກ ຂຽນຄຳຕອບໃສ່ເຈັ້ຍແຜ່ນໃຫຍ່ ຈາກນັ້ນຈຶ່ງ ນຳສະເໜີ ຄວາມສຳຄັນເພື່ອໃຫ້ນັກສຳມະນາກອນມີຄວາມເຂົ້າໃຈເປັນເອກະພາບກັນດັ່ງນີ້:

     ການສ້າງຕັ້ງກຸ່ມທ້ອນເງິນ ແມ່ນເພື່ອ:
   - ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານການເງິນຂອງຜູ້ທຸກຍາກ.
   - ເພື່ອສະສົມທຶນປະກອບເຂົ້າໃນການສ້າງລາຍຮັບ ແລະ ສົ່ງເສີມວຽກເຮັດງານທຳໃຫ້ແກ່ຄົນທີ່ທຸກຍາກ (ທັງຊາຍ ແລະ ຍິງ).
   - ເພື່ອສ້າງກຸ່ມທ້ອນເງິນໃຫ້ຊາວບ້ານດ້ວຍການລະດົມຊັບພະຍາກອນຂອງທ້ອງຖິ່ນ.
   - ເພື່ອຊ່ວຍໃຫ້ປະຊາຊົນ ມີຊັບສິນ ແລະ ຮັ່ງມີ ເພີ່ມຂື້ນ.
   - ເພື່ອສົ່ງເສີມການພັດທະນາແນວຄວາມຄິດ ແລະ ຄວາມຊຳນິຊຳນານ ໃນການປະກອບທຸລະກິດຄ້າຂາຍ ໃຫ້ກັບຊຸມຊົນ.
   - ເພື່ອປັບປຸງຄວາມສາມາດທາງດ້ານການຈັດການ ແລະ ການປະກອບການຂອງຄົນທຸກຍາກ.
   - ເພື່ອຈຳກັດການເອົາປຽບເອົາລັດຂອງນາຍທຶນທີ່ປ່ອຍເງິນໃຫ້ຄົນໃນທ້ອງຖິ່ນກູ້ຢືມ.
   - ເພື່ອເພີ່ມຄວາມຊຳນານແບບມືອາຊີບ ແລະ ຮູ້ນຳໃຊ້ເຕັກໂນໂລຊີຢ່າງມີປະສິດທິຜົນ.

   - ເພື່ອຈັດຫາທຶນທີ່ຈຳເປັນໃຫ້ແກ່ການເຄື່ອນໄຫວວຽກງານດ້ານເສດຖະກິດ.
   - ເພື່ອພັດທະນາອົງກອນການເງິນໃຫ້ກຸ້ມຕົນເອງເພິ່ງຕົນເອງໄດ້.

- ເພື່ອສະສົມຊັບສິນບັດ ແລະ ເງິນຄຳໄວ້ຊົມໃຊ້ໃນເວລາພົບບັນຫາ ທາງສິ່ງແວດລ້ອມ ແລະ ສັງຄົມ.
- ເພື່ອສະສົມເງິນໄວ້ແກ້ໄຂໃນເວລາເຈັບໄຂ້, ເຖົ້າແກ່ສາລາ ແລະ ອື່ນໆ.

## 6. ຍຸດທະສາດກ່ຽວກັບການສ້າງຕັ້ງ ກຸ່ມທ້ອນເງິນ

ຄວາມຕ້ອງການ ຫຼື ຍຸດທະສາດກ່ຽວກັບການສ້າງຕັ້ງກຸ່ມທ້ອນເງິນ ໂດຍລວມແລ້ວມີ 6 ອົງປະກອບດ້ວຍ ຫົວຂໍ້ທີ່ສຳຄັນດັ່ງນີ້:

| ການພັດທະນາ ຄົນ | ການພັດທະນາທາງສັງຄົມ |
|---|---|
| • ຊ່ວຍປະຊາຊົນຊາວບ້ານຮຽນຮູ້ກ່ຽວກັບ ບັນຊີ ການເງິນ, ຄວາມໂປ່ງໃສ ສາມາດກວດສອບໄດ້ໃນການໂອນສິ່ງ ແລະ ນຳໃຊ້ເງິນ,ນະໂຍບາຍການທ້ອນ ແລະ ກູ້ຢືມເງິນ.<br>• ການ ສ້າງຂໍ້ກຳນົດກົດລະບຽບ ແລະມາດຕະການທາງດ້ານການເງິນ.<br>• ມີເງິນຄ້ຳປະກັນດ້ານສຸຂະພາບ, ການສຶກສາ ແລະ ອື່ນໆ<br>• ໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານ ແລະ ຜູ້ໃຫ້ທຶນຈາກອົງກອນຕ່າງໆ.<br>• ບັນລຸເປົ້າໝາຍ ດ້ານການໃຫ້ຄວາມຮູ້ ກ່ຽວກັບການປັບປຸງຊີວິດການເປັນຢູ່ພື່ອຄ້ຳປະກັນ ດ້ານໂພຊະນາການ ແລະ ການສຶກສາ. | • ສ້າງ ແລະ ສະໜັບສະໜູນຄວາມຜູກພັນແບບໃໝ່ ແລະ ເຂົ້າ ໃຈຊຶ່ງກັນ ແລະ ກັນ.<br>• ສ້າງຄວາມເຂັ້ມແຂງໃຫ້ແກ່ການຕັດສິນໃຈ ແລະ ຈັດຕັ້ງປະຕິບັດເປັນກຸ່ມ ໂດຍມີທຶນຊ່ວຍເຫຼືອ ທາງ ສັງຄົມ.<br>• ຊ່ວຍໃຫ້ກຸ່ມມີຄວາມ ສາມາດກຸ້ມຕົນເອງເພິ່ງ ຕົນເອງໄດ້ ແລະ ມີສ່ວນຮ່ວມໃນການພັດທະນາ ຊຸມຊົນ ແລະ ພັດທະນາ ບ້ານ.<br>• ແກ້ໄຂບັນຫາຄວາມຮຸນແຮງ ແລະການໃຊ້ ແຮງງານແມ່ຍິງ ເກີນຄວາມສາມາດ.<br>• ສ້າງໃຫ້ຊຸມຊົນມີຄວາມສາມະຄີເປັນປຶກແຜ່ນ ແລະ ມີນ້ຳໃຈຊ່ວຍເຫຼືອເກື້ອກຸນຊຶ່ງກັນ ແລະ ກັນ. |
| **ການພັດທະນາດ້ານການເງິນ** | **ການພັດທະນາທາງດ້ານຈິດໃຈ** |
| • ຊຸມຊົນ ມີການທ້ອນເງິນ ແລະ ກູ້ຢືມເງິນເປັນລະບົບ, ສະມາຊິກທຸກຄົນໄດ້ຮັບຜົນປະໂຫຍດຈາກກິດຈະກຳສ້າງລາຍຮັບ.<br>• ຊ່ວຍສະມາຊິກທ້ອນເງິນຈາກຈຳນວນນ້ອຍ ກາຍເປັນກອັນໃຫຍ່ສາມາດກຸ້ມຕົນເອງໄດ້ໂດຍບໍ່ເພິ່ງທະນາຄານທີ່ມີດອກເບ້ຍຂ້ອນຂ້າງສູງຊຶ່ງຜູ້ທຸກຍາກບໍ່ສາມາດເຂົ້າເຖິງໄດ້.<br>• ມີໂອກາດໄດ້ຮັບທຶນຊ່ວຍເຫຼືອຈາກອົງການຈັດຕັ້ງທາງນອກ ສຳລັບສະມາຊິກ ແລະ ຄອບຄົວຂອງເຂົາເຈົ້າ.<br>• ປ້ອງກັນບໍ່ໃຫ້ເງິນສົດເສັຍຫາຍເວລາຕ້ອງການທ້ອນເງິນດ້ວຍຕົນ ເອງ ແລະ ສ້າງໂອກາດໃຫ້ມີທຶນໄປ<br><br>ໝູນໃຊ້ເຂົ້າໃນວຽກ ງານກະສິກຳ ເພື່ອເພີ້ມລາຍຮັບ ແລະ ຊັບສິນວັດຖຸມີຄ່າ ແລະ ເງິນສົດ. | • ຊຸມຊົນມີຄວາມຜູກພັນກັນຫລາຍຂຶ້ນ, ແມ່ຍິງສາມາດຕັດສິນໃຈ ແລະ ອອກແບບໂຄງການປັບປຸງຊີວິດການເປັນຢູ່ດ້ວຍຕົນເອງ ແລະ ສາ ມາດເບິ່ງແຍງແກ້ໄຂບັນຫາຂອງຕົນເອງໄດ້.<br>• ມີປະສົບການກ່ຽວກັບການເປັນຜູ້ນຳພາກຸ່ມທ້ອນເງິນ.<br>• ປູກຝັງຈິດສຳນຶກ ແລະ ປ່ຽນແປງພຶດຕິກຳ ກ່ຽວກັບຄວາມໂປ່ງໃສກວດສອບໄດ້. |

| | |
|---|---|
| • ມີຍຸດທະສາດ ໃນການສ້າງລາຍຮັບຈາກການ ປູກຝັງ ລ້ຽງ ສັດ ຫລາກຫລາຍຮູບແບບ. | |
| <u>**ການພັດທະນາດ້ານຊັບສິນ(ວັດຖຸ)**</u><br>• ຊຸມຊົນມີຄວາມຮັ່ງມີຜາສຸກເຮັດໃຫ້ສະມາຊິກມີເງິນລົງທຶນໃສ່ກິດຈະກຳສ້າງລາຍຮັບຂອງຄອບຄົວ ໂດຍບໍ່ຕ້ອງເພິ່ງພາ ຄົນອື່ນມາຊ່ວຍເຫຼືອ ແລະ ບ້ານກໍ່ໄດ້ຮັບການພັດ ທະນາ ເຊັ່ນດຽວກັນ.<br>• ເຮັດໃຫ້ຊາວບ້ານສາມາດສ້າງສິ່ງໃໝ່ເກີດຂຶ້ນໃນບ້ານໄດ້ ເຊັ່ນ ເຮືອນ, ຮ້ານຄ້າ ແລະ ອື່ນໆ<br>• ຫລຸດຜ່ອນຈຳນວນຜູ້ດ້ອຍໂອກາດ ແລະເສັຍອົງຄະໄດ້. | <u>**ການພັດທະນາດ້ານສິ່ງແວດລ້ອມ**</u><br>• ຊຸມຊົນມີອົງການຈັດຕັ້ງຄຸ້ມຄອງຊັບພະຍາກອນທຳມະຊາດ ຢ່າງເປັນລະບົບ ເພື່ອປະສານງານກັບລັດຖະບານ ແລະ ອົງການຈັດຕັ້ງອື່ນໆ ທີ່ຮັບຜິດຊອບວຽກງານດັ່ງກ່າວນີ້ ແລະ ສາມາດມີລາຍຮັບ, ອາຫານທີ່ໄດ້ມາຈາກ ຈາກເຄື່ອງປ່າຂອງດົງໃນໄລຍະຍາວ. |

## 7. ຄວາມໝາຍ ກຸ່ມທ້ອນເງິນ

<u>ຖາມ</u>: 1. ຄຳວ່າ ທອັນເງິນແມ່ນຫັຍງ? ແລະ ຕາມຄວາມເຂົ້າໃຈຂອງພວກທ່ານ, ຄຳວ່າ ກຸ່ມທອັນເງິນແມ່ນຫຍັງ?



ຄຳວ່າ ທ້ອນເງິນ ແມ່ນ ການປະຢັດ ຫຼື ສະສົມ, ກັກຕູນ ລະງັບເອົາໄວ້ໃຊ້ໃນເວລາຈຳເປັນໃນອະນາຄົດ ຫຼື ເພື່ອເພີ້ມມູນຄ່າ ແລະ ຈຳນວນໃຫ້ຫລາຍຂື້ນ, ສະນັ້ນ ຈຶ່ງປະກອບດ້ວຍ ສອງອົງປະກອບດັ່ງນີ້:

- ລະບຽບການ ແລະ ການເສັຍສະລະ: ການລະງັບນຳໃຊ້ ສະສົມສິ່ງທີ່ມີຄ່າ ເພື່ອນຳໃຊ້ໃນອານາຄົດ ແທນທີ່ຈະນຳໃຊ້ຈົນໝົດໃນທັນທີທັນໃດ
- ແຜນການສຳລັບອານາຄົດ: ການອອມ ຫຼື ທອັນໄວ້ ທຸກຮູບແບບ ແມ່ນກ່ຽວກັບອານາຄົດ, ກ່ຽວກັບການເຮັດໄວ້ລ່ວງໜ້າ ແລະ ເປັນການກະກຽມປ້ອງກັນບໍ່ໃຫ້ມີຄວາມສ່ຽງ ແລະ ສາມາດມີໃຊ້ໃນເວລາຈຳເປັນສຸກເສີນ ເຊັ່ນ: ນຳໃຊ້ໃນເວລາ ເກັບກ່ຽວຜົນຜະລິດບໍ່ໄດ້ດີ, ເຈັບເປັນ ຫຼື ອຸປະຕິເຫດ , ອຸທົກກະໄພ ແລະ ອື່ນໆ).
- ກະກຽມ ສຳລັບ ໃຊ້ຈ່າຍໃສ່ໜ້າວຽກທີ່ຈະມາເຖິງ ເຊັ່ນ: ເປັນຄ່າຮຽນໃຫ້ລູກຫລານ, ຄ່າແຕ່ງງານ, ບຸນທານຕ່າງໆ ແລະ ດ້ານສົງເຄາະສັງຄົມອື່ນໆ ຫຼື ສຳລັບເປັນຕົ້ນທຶນໃນການສ້າງເສດຖະກິດໃໝ່ ຫຼື ຂະຫຍາຍຕາໜ່າງ ທຸລະກິດ ຂອງຕົນເອງໃຫ້ກວ້າງຂວາງອອກໄປອີກ.

- <u>**ຖາມຕໍ່**</u> **: ຄຳວ່າ ກຸ່ມທ້ອນເງິນແມ່ນຫັຍງ?**
  **ຜູ້ອຳນວຍຄວາມສະດວກຮັບຟັງຄຳຕອບ ຈາກນັ້ນຜູ້ອຳນວຍຄວາມສະດວກຈຶ່ງສະເໜີ ດັ່ງນີ້:**
  **ຄຳວ່າ ກຸ່ມທ້ອນເງິນ** ແມ່ນການລວມຕົວກັນຂອງກຸ່ມທີ່ມີຈຸດປະສົງອັນດຽວກັນໂດຍສະໝັກໃຈ ແລະ ສາມະຄີກັນເພື່ອຊ່ວຍເຫລືອ ຊຶ່ງກັນ ແລະ ກັນ ໃນການແກ້ໄຂບັນຫາເສດຖະກິດ-ສັງຄົມຂອງຄອບຄົວ ແລະ ດ້ານ ອື່ນໆ ເພື່ອ ຊ່ວຍໃຫ້ຊີວິດການເປັນຢູ່ດີຂື້ນເທື່ອລະກ້າວ.

1) **ຮູບແບບຂອງການທ້ອນ ຫຼື ສະສົມສ້າງຄັງ ແລະ ການກູ້ຢືມ**

**ຖາມ**: ໃນໄລຍະຜ່ານມາ ທ່ານເຄີຍ ທ້ອນ ແລະ ສະສົມເພື່ອສ້າງຄັງບໍ່? ຖ້າເຄີຍມີຫັຍງແດ່?

**ຕອບ**: ການທ້ອນເງິນ ຫຼື ສະສົມເງິນ ມີຫລາຍຮູບແບບ ຄື:

- o ຄົນເຮົາມີການທ້ອນມີຫລາຍຮູບແບບ, ທ້ອນດ້ວຍຕົນເອງ, ທ້ອນເປັນກຸ່ມ, ເຂົາເຈົ້າໄດ້ທອັນເປັນວັດຖຸ ຫຼື ຜົນຜະລິດຈາກ ທຳມະຊາດ ແລະ ກະສິກຳ, ທ້ອນເງິນສົດ ໄວ້ເຮືອນ ຫຼື ໄວ້ໃນທະນາຄານ, ໃຫ້ຄົນອື່ນຢືມໄປປະກອບທຸລະກິດ ແລະ ສ້າງລາຍຮັບ ອື່ນໆ.

**ຖາມ**: ພວກທ່ານ ເຄີຍຢືມເງິນບໍ່? ຖ້າເຄີຍ ຮູບແບບລັກສະນະຂອງການຢືມມີຈັກຮູບແບບ?

**ຕອບ**: ການຢືມເງິນມີຫລາຍຮູບແບບ ເຊັ່ນ: ກູ້ຢືມແບບມີດອກເບັ້ຍ ແລະ ບໍ່ມີດອກເບັ້ຍ. ບໍ່ມີດອກເບັ້ຍ ແມ່ນ ສາມາດກູ້ຢືມໄດ້ຈາກ ພໍ່ແມ່, ອ້າຍເອື້ອຍນ້ອງ ແລະ ໝູ່ເພື່ອນສະໜິດ, ມີດອກເບັ້ຍ ແມ່ນກູ້ຢືມຈາກທະນາຄານ, ກັບບຸກຄົນທີ່ຮູ້ຈັກກັນ ແຕ່ບໍ່ ມີຄວາມຜູກພັນ, ຫລັງຈາກນັ້ນຕ້ອງໄດ້ຈ່າຍຄືນໂດຍມີດອກເບັ້ຍຕາມການຕົກລົງກັນໄວ້. ການຢືມເງິນ ອາດຈະແພງ, ມີຄວາມສ່ຽງ, ມີຄວາມຫຍຸ້ງຍາກ, ມີຄວາມກົດດັນອື່ນໆ, ສະນັ້ນ ການທີ່ຈະຮຽກຮ້ອງໃຫ້ ຜູ້ທຸກຍາກທ້ອນເງິນ ອາດຈະເປັນໄປໄດ້ຍາກ ແຕ່ວ່າຈະຕ້ອງໄດ້ເອົາໃຈໃສ່ດັ່ງນີ້:

**ຖາມ**: ພວກທ່ານຄິດວ່າ ຜູ້ທຸກຍາກ ກໍມີການທ້ອນເງິນໄດ້ບໍ່ ? ຖ້າໄດ້ຈະເຮັດແນວໃດ?

**ຕອບ**: ຜູ້ທຸກຍາກກໍ່ມີການທອັນເງິນຄືກັນ ແຕ່ ອາດຈະໜ້ອຍ ແລະ ອາດຈະເປັນວັດຖຸຫລາຍກວ່າ ເຊັ່ນ: ເຂົ້າ. ຜັກຫຽມ, ຜັກບົ່ວ, ແນວພັນຕ່າງໆ ເງິນສຳລັບຄ່າຮຽນລູກ, ດັ່ງນັ້ນ ກໍ່ໝາຍຄວາມວ່າ ຜູ້ທຸກຍາກ ກໍ່ມີການທ້ອນສິ່ງໃດສິ່ງໜຶ່ງເຊັ່ນດຽວກັນ. ແຕ່ເຖິງແນວໃດກໍ່ຕາມ ເຂົາເຈົ້າກໍ່ຍັງພົບຄວາມຫຍຸ້ງຍາກ ຫລາຍປະການຢູ່. ເພື່ອ ຊ່ວຍປັບປຸງແກ້ໄຂບັນຫາທີ່ເຂົາເຈົ້າພົບ ຮູບແບບ ການທ້ອນເງິນເປັນກຸ່ມແມ່ນຈະເໝາະສົມສຳລັບເຂົາເຈົ້າ. ເພາະວ່າ ການທ້ອນເງິນຄົນດຽວ ດ້ວຍຈຳນວນໜ້ອຍ ແມ່ນຕ້ອງໃຊ້ເວລາ ກວ່າເຂົາເຈົ້າຈະໄດ້ເງິນພຽງພໍໃນການໃຊ້ຈ່າຍສິ່ງທີ່ຈຳເປັນ ແລະ ມີລາຄາແພງ. ແຕ່ຖ້າເຂົາເຈົ້າທ້ອນເງິນເປັນກຸ່ມ ດ້ວຍຈຳນວນໜ້ອຍ ແລະ ພັດປ່ຽນກັນຢືມ ຈະສາມາດທ້ອນເງິນໄດ້ໄວ , ຫລາຍກວ່າ ແລະ ສາມາດມີເງິນເປັນກອັນໃຊ້ເຂົ້າໃນການລົງທຶນໃນດ້ານຕ່າງໆໄດ້ໄວກວ່າ. ດັ່ງນັ້ນ, ຄຳວ່າຜູ້ທຸກຍາກມີຄວາມຮູ້ຕ່ຳ, ຊີວິດມີຄວາມສ່ຽງ ແລະ ດອ້ຍໂອກາດ, ບໍ່ສາມາດເຂົ້າເຖິງສະຖາບັນການເງິນ, ບໍ່ມີເງິນໃຊ້ຈ່າຍພັນທະພາສີຕ່າງໆໃນສັງຄົມ ແມ່ນຈະໝົດໄປ, ຖ້າຫາກ ເຂົາເຈົ້າ
ມີຄວາມອົດທົນ ແລະ ປະຢັດ.

2) **ປັດໃຈທີ່ສາມາດກໍ່ໃຫ້ເກີດ ຂໍ້ຈຳກັດໃນການທ້ອນເງິນ:**

ຜົນສຳເລັດຂອງກິດຈະກຳກຸ່ມທ້ອນເງິນ ແມ່ນ ຂຶ້ນກັບຈຳນວນສະພາບການ ຂອງການໃຫ້ການສົ່ງເສີມຊ່ວຍເຫຼືອ ແລະ ສິ່ງກີດກັ້ນຮູບແບບນີ້. ເພາະສະນັ້ນ ຈິ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງການອອກແບບກິດຈະກຳໃຫ້ແທດເໝາະກັບສະພາບສິ່ງແວດລ້ອມໃນຂັ້ນທ້ອງຖິ່ນ ລະມັດລະວັງການຕີລາຄາປະເມີນຜົນສະພາບການໃນຂັ້ນທ້ອງຖິ່ນ ລວມທັງ ຄວາມຮູ້ ແລະ ປະສົບການ ປະຫັວດຄວາມເປັນມາຂອງ ສະມາຊິກກຸ່ມ (ມີແລ້ວ ຫຼື ສ້າງຕັ້ງໃໝ່) ແລະ ຄວນເອົາໃຈໃສ່ປັດໃຈດັ່ງນີ້:

- ການນຳໃຊ້ເງິນສົດ




- ການເຂົ້າເຖິງທະນາຄານ




- ອັດຕາເງິນເຟີ້:




- ຄວາມແຕກຕ່າງດ້ານສັງຄົມ-ເສດຖະກິດ




- ການ ຝຶກຫັດ ທ້ອນແບບພື້ນບ້ານ ແລະ ມູນຄ່າທາງສັງຄົມ



- ບົດບາດຍິງ-ຊາຍ



- ໂອກາດໃນການລົງທຶນ



- ເສີມສ້າງກຸ່ມທີ່ມີໃນບ້ານແລ້ວ
- ຢູ່ໄກ້ກັນ
- ການສຶກສາ
- ສຸຂະພາບ
- ນະໂຍບາຍ ແລະ ການຈັດຕັ້ງ



3) <u>ຂໍກຸນແຈຂອງຄວາມສຳເລັດ</u>

ປັດໃຈສຳຄັນທີ່ເຮັດໃຫ້ ກຸ່ມທ້ອນເງິນພົບຄວາມສຳເລັດ ປະກອບດ້ວຍ ປັດໃຈດັ່ງລຸ່ມນີ້:

4.1-ຕ້ອງມີຂໍ້ຜູກມັດຮ່ວມກັນ ມີຄວາມຕ້ອງການສິນໃຈກິດຈະກຳຄືກັນ ຈຶ່ງຈະບໍ່ເກີດຂໍ້ຂັດແຍ່ງ

7.2-ມີຈຸດປະສົງໃນການທ້ອນເງິນທີ່ຈະແຈ້ງ

7.3-ຂະໜາດກຸ່ມນ້ອຍ 8-16 ຄົນ (ເຮັດແຕ່ນ້ອຍຫາໃຫຍ່, ເຮັດແຕ່ງ່າຍຫາຍາກ) ເພາະມັນໝາຍຄວາມວ່າ

7.4- ກຸ່ມນ້ອຍ ມີບັນຫານ້ອຍ ຫຼື ມີຄວາມຜິດນ້ອຍ ສາມາດບໍລິຫານຈັດການໄດ້ງ່າຍກວ່າກຸ່ມໃຫຍ່ ເມື່ອສະສົມ ປະສົບການໄດ້ແລ້ວ ຈະຂະຫຍາຍກຸ່ມໃຫ້ໃຫຍ່ຂື້ນກໍ່ຍັງໄດ້ສະເໝີ

4.5- ມີລະບຽບວິໄນ

4.6- ເຮັດວຽກເປັນທີມງານ

4.7-ມີຄວາມໄວ້ວາງໃຈ

4.8- ມີການວາງແຜນ ເພື່ອຂະຫຍາຍ ຫຼື ສ້າງຄວາມເຕີບໂຕໃຫ້ກັບກຸ່ມທ້ອນເງິນ

4) <u>ລັກສະນະສະແດງໃຫ້ເຫັນເຖິງຄວາມສຳເລັດຂອງກຸ່ມ</u>

4.1 ສະມາຊິກກຸ່ມມີຂໍ້ຜູກມັດຊຶ່ງກັນ ແລະ ກັນ.

4.2ສະມາຊິກມີຄວາມເຂົ້າໃຈແຈ້ງຕໍ່ກັບຈຸດປະສົງຂອງກຸ່ມ.

4.3ສະມາຊິກເຫັນດີເປັນເອກະພາບກັນ ຕໍ່ກົດລະບຽບຂອງກຸ່ມ ແລະ ປະຕິບັດຢ່າງເຂັ້ມງວດ.

4.4ສະມາຊິກມີຄວາມຈິງໃຈຕໍ່ກັນ, ໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ.

4.5 ເປີດເຜີຍ ແລະ ອົດທົນເຮັດວຽກໜັກ ເພື່ອບັນລຸຈຸດປະສົງຂອງກຸ່ມ.

4.6ສະມາຊິກຕ້ອງເຂົ້າຮ່ວມທຸກກອງປະຊຸມເປັນປົກກະຕິ ເພື່ອປຶກສາຫາ ລື ວຽກງານ ແລະຕັດສິນໃຈ ແກ້ໄຂບັນຫາຮ່ວມກັນ.

4.7ສະມາຊິກໄດ້ຜັດປ່ຽນກັນ ເປັນຜູ້ນຳພາຈັດກອງປະຊຸມກຸ່ມ.

4.8ສະມາຊິກໄດ້ມີການຈົດແຕ້ມ ຫຼື ບັນທຶກກິດຈະກຳດຳເນີນກອງປະຊຸມຂອງເຂົາເຈົ້າຢ່າງ ລະອຽດຄົບຖ້ວນ.

## ບົດທີ 2
## ການສ້າງຕັ້ງກຸ່ມທ້ອນເງິນ ຂັ້ນບ້ານຕາມລະບຽບການຂອງ ຄປພ/LONG

1. **ກຳນົດເວລາ: 1:30 ນາທີ**
2. **ຈຸດປະສົງ**
    - ຄັດເລືອກ ຜູ້ນຳພາ ແລະ ຄະນະບໍລິຫານງານກຸ່ມທ້ອນເງິນຂັ້ນບ້ານທີ່ເໝາະສົມມີຄວາມຮູ້ ແລະ ປະສົບການ.
    - ເພື່ອສ້າງຄວາມເຂັ້ມແຂງ ໃຫ້ທຸກຄົນທີ່ມີສ່ວນຮ່ວມໃນການເຄື່ອນໄຫວວຽກງານກຸ່ມທ້ອນເງິນໄດ້ ຖືກຈັດຕັ້ງປະຕິບັດໄດ້ດີ ມີການພັດທະນາທີ່ກ້າວໜ້າ ແລະ ກ່ຽວກັບວຽກງານການສ້າງລາຍຮັບ ເພື່ອຫລຸດຜ່ອນຄວາມທຸກຍາກ.
    - ເພື່ອເຮັດໃຫ້ຊາວບ້ານສ້າງຕັ້ງກຸ່ມທ້ອນເງິນຂອງຕົນເອງ ແລະ ມີຂໍ້ກຳນົດກົດລະບຽບທີ່ເປັນ ເອກະພາບ ແລະ ຕັດສິນໃຈຮັບຮອງເອົາໄດ້ດ້ວຍຕົນເອງ.

3. **ຜູ້ອຳນວຍຄວາມສະດວກ: 2 ທ່ານ**
4. **ເຄື່ອງມື:**
    - ເຈັ້ຍແຜ່ນໃຫຍ່
    - ບິກຂຽນເຈັ້ຍແຜ່ຍໃຫຍ່
    - ເທບຕິດເຈັ້ຍ




5. **ຮູບແບບການນຳສະເໜີ: ຖາມ, ຕອບ**

❖ **ສະເໜີຈຸດປະສົງ ແລະ ນະໂຍບາຍຕ່າງໆຂອງ ຄປພ**

ຜູ້ອຳນວຍຄວາມສະດວກ 2 ທ່ານ

ຈຸດປະສົງຂອງ ການສ້າງຕັ້ງ ກຸ່ມທ້ອນເງິນຂອງ ຄປພ ແມ່ນເພື່ອ:

- ເຮັດໃຫ້ຊຸມຊົນມີລາຍຮັບ, ລາຍຈ່າຍທີ່ສົມດູນກັນເຊັ່ນ:ຝາກປະຢັດໄວ້ໃນເວລາມີຄວາມສາມາດ ຫຼື ມີເຫື່ອມີແຮງຊອກຫາມາໄດ້ ເພື່ອເອົາໄວ້ໃຊ້ໃນເວລາຈຳເປັນ ແລະ ພົບຂໍ້ຫຍຸ້ງຍາກ.
- ການສຶກສາຂອງລູກ ແລະ ເພື່ອກະກຽມໄວ້ ສຳລັບໃຊ້ໃນເວລາເຖົ້າແກ່ສະລາການ.
- ທ້ອນໄວ້ໄປລົງທຶນໃສ່ ການສ້າງເສດຖະກິດຄອບຄົວ(ອາດຈະເລີ້ມໃໝ່ ຫຼື ຂະຫຍາຍສືບຕໍ່ກິດຈະການກໍ່ໄດ້ ເຊັ່ນ: ການຊື້ ແມ່ພັນງົວ, ເລີ້ມສ້າງຕັ້ງກິດຈະກຳລາຍຮັບ ເຮັດທຸລະກິດຜລິດເປັນສິນຄ້າ, ເກັບເມັດພັນຕ່າງໆໄວ້ຂາຍໃນເວລາມີລາຄາແພງ ຫຼື ໄວ້ໃຊ້ໃນເວລາເລີ້ມຕົ້ນລະດູການຜລິດໃນແຕ່ລະປີ, ເພື່ອໃຊ້ຈ່າຍໃນເວລາມີບຸນມີງານຕ່າງໆ ພາຍໃນ ແລະ ນອກບ້ານ)
- ກະກຽມຮັບມືກັບຄວາມສ່ຽງທາງດ້ານການເງິນ ທີ່ອາດຈະຕ້ອງໄດ້ນຳໃຊ້ເຂົ້າໃນການແກ້ໄຂໃຊ້ຈ່າຍໃນວຽກຮີບດ່ວນ ແລະ ຈຳເປັນ ເຊັ່ນ: ໄພພິບັດ ນ້ຳຖ້ວມ, ໄຟໄໝ້, ເຈັບເປັນ ແລະ ອື່ນໆ.
- ເພື່ອສ້າງຄວາມຮັ່ງມີ ທາງດ້ານຊັບສິນ ເງິນຄຳ ແລະ ມີລາຍຮັບເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ໂພຊະນາການສຳລັບແມ່ ແລະ ເດັກລວມທັງຄອບຄົວ ແລະ ຊຸມຊົນຜູ້ດ້ອຍໂອກາດ

ແລະ ຜູ້ທຸກຍາກທຸກຄົນໃນບ້ານຈະໄດ້ມີໂອກາດພັດທະນາຕົນເອງໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກ.

## 6. ຮູບແບບວິທີການຝາກເງິນ:

- ສາມາດສ້າງຕັ້ງເປັນກຸ່ມຍິງທັງໝົດ, ກຸ່ມຍິງ ແລະ ຊາຍ, ຊາວໜຸ່ມ, ຜູ້ທຸກຍາກ, ຜູ້ເສັຍອົງຄະ, ຊົນເຜົ່າດຽວກັນ ແລະ ອື່ນໆ.
- ການກຳນົດຈຳນວນເງິນ ທີ່ຈະຕ້ອງຝາກແມ່ນຂຶ້ນກັບການປຶກສາຫາລື ແລະ ຕັດສິນໃຈຂອງກຸ່ມ ໂດຍມີທາງເລືອກດັ່ງນີ້:
  - o ຈຳນວນຝາກຕ່ຳສຸດບໍ່ໃຫ້ຫລຸດ 2000 ກີບ, 5000 ກີບ ຕໍ່ອາທິດ.
  - o ຈຳນວນຝາກຕ່ຳສຸດບໍ່ໃຫ້ຫລຸດ 2000 ກີບ, 5000 ກີບ/ຕໍ່ເດືອນແຕ່ບໍ່ຈຳກັດມື້ຝາກ ໝາຍຄວາມວ່າຫາໄດ້ເອົາມາຝາກໄດ້ທຸກເວລາ.
  - o ຈຳນວນຝາກຕ່ຳສຸດບໍ່ໃຫ້ຫລຸດ 2000 ກີບ, 5000 ກີບ/ຕໍ່ເດືອນແຕ່ຈຳກັດມື້ຝາກ ໝາຍຄວາມວ່າຫາໄດ້ເອົາມາຝາກຕາມເວລາທີ່ໄດ້ກຳນົດກັນໄວ້.
  - o ກຳນົດເວລາໃນການຝາກ 3-4 ເດືອນຈະມີການປະເມີນຜົນຄວາມເຂັ້ມແຂງກຸ່ມ (ຖ້າເຂັ້ມແຂງທ່ານສາມາດສະເໜີໂຄງການຍ່ອຍທີ່ຕ້ອງການການຊ່ວຍເຫຼືອໄດ້ ພາຍໃນ 3 ເດືອນ, ຖ້າບໍ່ທັນເຂັ້ມແຂງ ສືບຕໍ່ອີກເດືອນທີ່ 4 ພະນັກງານ ຄປພ ຈຶ່ງຈະມາປະເມີນຜົນເປັນຄັ້ງທີ່ 2, ຖ້າຜົນອອກມາເຂັ້ມແຂງ ແມ່ນສາມາດ ສະເໜີໂຄງການຍ່ອຍຂອງກຸ່ມຈາກ ຄປພ ໄດ້, ຖ້າຍັງບໍ່ໄດ້ ກຸ່ມຈະຕ້ອງໃຊ້ຄວາມພະຍາຍາມ ແລະ ພະນັກງານ ຄປພ ຈະເພີ່ມຄວາມໄກ້ສິດກັບກຸ່ມທ່ານ ເປັນກໍລະນີພິເສດ ຈົນກວ່າ ກຸ່ມທ່ານມີຄວາມເຂັ້ມແຂງ ຈຶ່ງສາມາດສະເໜີ ຂໍໂຄງການຍ່ອຍຈາກ ທລຍ ໄດ້).
  - o ການກຳນົດດອກເບ້ຍແມ່ນ ອີງຕາມຕົ້ນທຶນທີ່ຢືມໄປ ແລະກຳນົດຕ່ຳສຸດບໍ່ໃຫ້ຫລຸດ 2% ຕໍ່ເດືອນບໍ່ວ່າພາຍໃນກຸ່ມ ຫລື ນອກກຸ່ມ ແລ້ວແຕ່ກອງປະຊຸມຕົກລົງກັນ.ສ່ວນເຈັບເປັນແມ່ນບໍ່ໃຫ້ຫລຸດ 1% ເພາະວ່າເປັນຫຍັງຈຶ່ງເກັບດອກເບັ້ຽບໍ່ໃຫ້ຫລຸດ 2% ເພາະຕົກຢູ່ປີໜຶ່ງ 24 % ຈະສູງກວ່າທະນາຄານແຕ່ວ່າເພື່ອ ປ້ອງກັນຄວາມສ່ຽງຂອງຄ່າເງິນເຟີ້ ຫລືເກັບກູ້ເງິນບໍ່ໄດ້ຕາມກຳນົດ ຫລືວ່າເກັບດອກເບັ້ຽບໍ່ໄດ້. ເຖິງດອກເບັ້ຽຈະສູງ ກວ່າທະນາຄານກໍ່ຕາມ ແຕ່ມັນພັດແມ່ນເງິນຂອງກຸ່ມພວກເຮົາເອງ ແລະ ສ່ວນກຳໄລຈາກດອກເບັ້ຽແມ່ນພວກເຮົາຈະໄດ້ຮັບການແບ່ງປັນຜົນ ແລະ ເປັນເງິນຂອງພວກເຮົາຄືເກົ່າ, ສ່ວນດອກເບັ້ຽຂອງທະນາຄານເຮົາຈະບໍ່ໄດ້ຮັບສ່ວນແບ່ງຫຍັງເລີຍ. ຜົນດີໃນການເກັບດອກເບັ້ຽສູງນັ້ນແມ່ນກອງທຶນຂອງພວກຈະນັບມື້ນັບເຕີບໂຕຂຶ້ນ ແລະ ສາມາດເຮັດທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໄດ້, ແຕ່ຢ່າງໃດກໍຕາມກໍ່ຍັງຕ່ຳກວ່າຢືມເງິນຈາກເອກກະຊົນຫລາຍເທົ່າຕົວ .

**ຖາມ**: ພວກທ່ານເຄີຍຟັງນະໂຍບາຍ ແລະ ລະບຽບການສ້າງຕັ້ງກຸ່ມ ທ້ອນເງິນ ຂອງ ຄປພ ແລະ ເຂົ້າໃຈລະອຽດແລ້ວບໍ່?

**ຕອບ**: ຖ້າຍັງບໍ່ທັນ ເຂົ້າໃຈນະໂຍບາຍ ຕ້ອງເບິ່ງ ລະບຽບການມີດັ່ງນີ້: ການທ້ອນເງິນ ແມ່ນມີຫລາຍຮູບແບບ ແລະ ມີຄວາມຈຳເປັນຕ້ອງມີ ເງື່ອນໄຂໃນການທ້ອນ ແລະ ກູ້ຢືມເງິນ ມີ 3 ເງື່ອນໄຂດັ່ງຕໍ່ໄປນີ້:

1) **<u>ເງື່ອນໄຂ ສຳລັບ ກຸ່ມຊ່ວຍເຫຼືອຊຶ່ງກັນ ແລະ ກັນ (ກຊກ) ຫລື ກຸ່ມທ້ອນເງິນ</u>**

- ຕ້ອງທຸກຍາກ (ດ້ານເສດຖະກິດ ແລະ ສັງຄົມ).
- ຕ້ອງຮູ້ ແລະ ຄຸ້ນເຄີຍຊຶ່ງກັນ ແລະ ກັນດີ.
- ຕ້ອງມີບັນຫາທີ່ຄ້າຍຄືກັນ ແລະ ຕ້ອງການເຮັດວຽກຮ່ວມກັນ ເພື່ອແກ້ໄຂ ບັນຫາ ຮ່ວມກັນ.
- ເຊື່ອໃຈ ແລະ ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ .
- ຕ້ອງມາຈາກກຸ່ມຊົນເຜົ່າດຽວກັນ ເພື່ອແນ່ໃຈວ່າ ກຸ່ມ ຈະເປັນນ້ຳໜຶ່ງໃຈດຽວ ກັນ.
- ຕ້ອງມີຄວາມຕ້ອງການອັນແຮງກ້າ ທີ່ຈະເຂົ້າມາເປັນຊະມາຊິກກຸ່ມ ດ້ວຍ ຄວາມສະໝັກໃຈ.
- ສາມາດທອ້ນເງິນປົກກະຕິ.
- ມີຄວາມພ້ອມທີ່ ຈະແບ່ງ ແລະ ເສັຍສະລະເວລາເຂົ້າໄປຮ່ວມກອງປະຊຸມກຸ່ມ.

2) **<u>ເງື່ອນໄຂ ສຳລັບການສ້າງຕັ້ງກຸ່ມ</u>**

- ໃນບ້ານໜຶ່ງສາມາດ ສ້າງຕັ້ງເປັນຫລາຍໆກຸ່ມໄດ້.
- ໜຶ່ງຄົນ ສາມາດບັນຈຸ ເປັນສາມາຊິກ ໃນ ໜຶ່ງ ກຸ່ມ ກຊກ ເທົ່ານັ້ນ, ແຕ່ແນວ ໃດກໍຕາມ, ສາມະຊິກ ກຊກ ຜູ້ທີ່ທຸກຍາກສຸດແມ່ນ ສາມາດເຂົ້າເປັນສາມະຊິກ ກຸ່ມໂພຊະນາການໄດ້ .ໃນຄົວເຮືອນໜຶ່ງ ສາມາດແຍກອອກໄປສະມັກເຂົ້າເປັນສະມະຊິກໄດ້ຫລາຍກຸ່ມ (ໝາຍຄວາມວ່າ: ສະມາຊິກໃນໜຶ່ງຄົວເຮືອນ ແມ່ນບໍ່ອະນຸຍາດໃຫ້ຢູ່ກຸ່ມດຽວກັນ).
- ກຸ່ມແມ່ຍິງຈະໃຫ້ການສົ່ງເສີມເປັນກໍລະນີພິເສດ.
- ໃຫ້ການສົ່ງເສີມ ສຳລັບກຸ່ມຊາວໜຸ່ມ (ແຕ່ຕ້ອງມີອາຍຸແຕ່ 15 ປີຂື້ນໄປ ຫາ 35 ປີ).
- ໜຶ່ງກຸ່ມໃຫ້ມີສະມາຊິກແຕ່ 8 - 16 ຄົນເທົ່ານັ້ນ.

3) **<u>ເງື່ອນໄຂ ສຳລັບ ການສ້າງກົດລະບຽບຂອງກຸ່ມ</u>**

- ທຸກຄົນມີສິດສະເໝີພາບກັນ
- ຕ້ອງມີຄວາມເປັນເອກະພາບກັນ ໃນການຕັດສິນໃຈ
- ຕ້ອງມີການປະຊຸມກຸ່ມຢ່າງເປັນປົກກະຕິ
- ຕ້ອງຝາກເງິນເປັນປົກກະຕິ
- ມີການຈົດຮັບຈົດຈ່າຍ ແລະ ບັນທຶກການເຄື່ອນໄຫວຢ່າງເປັນປົກກະຕິ
- ຕ້ອງມີປະທານກຸ່ມ, ຮອງປະທານ, ເລຂາ ແລະ ຄັງເງິນສົດ
- ທຸກຂໍ້ມູນຂ່າວສານ ແມ່ນຈະຕ້ອງໂປ່ງໃສ ແລະ ສາມາດກວດສອບໄດ້

4) **<u>ການຄັດເລືອກ ຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານ:</u>**

- ➢ ຜູ້ອຳນວຍຄວາມສະດວກ 1 ທ່ານ ສະເໜີດັ່ງນີ້:
  ຢູ່ໃນບ້ານໜຶ່ງ ຄະນະບໍລິຫານງານ ກຸ່ມທ້ອນເງິນ ຈະປະກອບດ້ວຍ 2 ຄະນະ ດັ່ງນີ້:
  - ຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານ
  - ຄະນະບໍລິຫານຄຸ້ມຄອງ ກຸ່ມທ້ອນເງິນ (ກຊກ)
- ➢ ອ່ານຜ່ານເງື່ອນໄຂ ຂອງຜູ້ທີ່ສະໝັກເປັນຄະນະປະສານງານ ກຸ່ມທ້ອນເງິນຂັ້ນບ້ານ
  ຜູ້ທີ່ຈະສະໝັກເປັນຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານມີດັ່ງນີ້:

- ຕ້ອງເປັນຜູ້ຮູ້ໜັງສື, ອ່ານໄດ້ຂຽນເປັນ
- ມີຄວາມເປັນຜູ້ນຳພາກຸ່ມໄດ້
- ມີ ສຸຂະພາບເຂັ້ມແຂງ ແລະ ເປັນທີ່ນັບຖືຂອງຊາວບ້ານ
- ມີຄວາມສະໝັກໃຈ ແລະ ມີນ້ຳໃຈເສັຍສະລະເພື່ອສ່ວນລວມ
- ມີຄວາມຊື່ສັດ, ຍຸດຕິທຳ,ໜັກແໜ້ນອິດທົນ ເປັນແບບຢ່າງແກ່ຊາວບ້ານ
- ມີທັດສະນະຫລັກໝັ້ນ ແລະ ມີຄຸນສົມບັດ
- ບໍ່ຈຳແນກຊົນຊັ້ນວັນນະ ແລະ ຊົນເຜົ່າຕ່າງໆ
- ເປັນນາຍຄູ, ພະນັກງານເກົ່າ, ອາສາສະໝັກສາທາລະນະສຸກ ແລະ ແມ່ຍິງໃຫ້ມີການພິຈາລະນາ ເປັນກໍລະນີພິເສດ

5) <u>ການຄັດເລືອກ ຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານ:</u>

- ຜູ້ອຳນວຍຄວາມສະດວກ 1 ທ່ານ ສະເໜີດັ່ງນີ້:
  ຢູ່ໃນບ້ານໜຶ່ງ ຄະນະບໍລິຫານງານ ກຸ່ມທ້ອນເງິນ ຈະປະກອບດ້ວຍ 2 ຄະນະ ດັ່ງນີ້:
  - ຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານ
  - ຄະນະບໍລິຫານຄຸ້ມຄອງ ກຸ່ມທ້ອນເງິນ (ກຊກ)
- ອ່ານຜ່ານເງື່ອນໄຂ ຂອງຜູ້ທີ່ສະໝັກເປັນຄະນະປະສານງານ ກຸ່ມທ້ອນເງິນຂັ້ນບ້ານ
  ຜູ້ທີ່ຈະສະໝັກເປັນຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານມີດັ່ງນີ້:
- ຕ້ອງເປັນຜູ້ຮູ້ໜັງສື, ອ່ານໄດ້ຂຽນເປັນ
- ມີຄວາມເປັນຜູ້ນຳພາກຸ່ມໄດ້
- ມີ ສຸຂະພາບເຂັ້ມແຂງ ແລະ ເປັນທີ່ນັບຖືຂອງຊາວບ້ານ
- ມີຄວາມສະໝັກໃຈ ແລະ ມີນ້ຳໃຈເສັຍສະລະເພື່ອສ່ວນລວມ
- ມີຄວາມຊື່ສັດ, ຍຸດຕິທຳ,ໜັກແໜ້ນອິດທົນ ເປັນແບບຢ່າງແກ່ຊາວບ້ານ
- ມີທັດສະນະຫລັກໝັ້ນ ແລະ ມີຄຸນສົມບັດ
- ບໍ່ຈຳແນກຊົນຊັ້ນວັນນະ ແລະ ຊົນເຜົ່າຕ່າງໆ
- ເປັນນາຍຄູ, ພະນັກງານເກົ່າ, ອາສາສະໝັກສາທາລະນະສຸກ ແລະ ແມ່ຍິງໃຫ້ມີການພິຈາລະນາ ເປັນກໍລະນີພິເສດ.

## <u>ຈາກນັ້ນ ອະທິບາຍ ວິທີການຄັດເລືອກດັ່ງນີ້:</u>

## <u>ກຳນົດເວລາ 1 ຊົ່ວໂມງ</u>

ພາຍຫັລງເອກະພາບ ແລະ ຮູ້ຈຳນວນກຸ່ມທ້ອນເງິນພາຍໃນບ້ານແລ້ວ ຜູ້ອຳນວຍຄວາມສະດວກ ຈະແຍກກຸ່ມອອກໄປ ແຕ່ລະກຸ່ມ, ຈາກນັ້ນ ເລີ້ມຄັດເລືອກ ຄະນະບໍລິຫານງານກຸ່ມທ້ອນເງິນ ໃຫ້ໄດ້ 5 ທ່ານ, ໃນນັ້ນ ມີ ຍິງ 2 ທ່ານ ແລະ ຊາຍ 3 ທ່ານ, ລາຍລະອຽດປະກອບດ້ວຍ:

- 1 ທ່ານ ເປັນປະທານກຸ່ມ
- 1 ທ່ານ ເປັນຮອງກຸ່ມ
- 1 ທ່ານ ເປັນບັນຊີການເງິນທອັນຂອງກຸ່ມ

- 1 ທ່ານ ບັນຊີເງິນສົດ ຂອງກຸ່ມ
- 1 ທ່ານ ເປັນຜູ້ ຕິດຕາມ ແລະ ຊີ້ນຳດ້ານເຕັກນິກ ແລະ ການຕະລາດຂອງກຸ່ມ

ຫລັງຈາກນັ້ນສະເໜີໃຫ້ ສະມາຊິກກຸ່ມ ຄັດເລືອກເອົາ 2 ທ່ານ ເພື່ອເປັນຕົວແທນຂອງກຸ່ມເຂົ້າໄປບັນຈຸໃສ່ຄະນະປະສານງານກຸ່ມທ້ອນເງິນຂັ້ນບ້ານ. ສຳເລັດການຄັດເລືອກ ຄະນະກຳມະການແລ້ວ ຜູ້ອຳນວຍຄວາມສະດວກຈະໄດ້ສືບຕໍ່ຮ່າງລະບຽບການຂອງກຸ່ມທ້ອນເງິນດັ່ງນີ້:

## 1) ທີ່ປຶກສາ ຂອງ ກຸ່ມທ້ອນເງິນ:

1.1. ເປັນຕົວແທນຂອງອຳນາດການປົກຄອງບ້ານ, ຜູ້ຊົງຄຸນວຸດທິເຖົ້າແກ່ແນວໂຮມ, ສະຫະພັນແມ່ຍິງ ຄູອາຈານ ທີ່ຖືກນຳສະເໜີຊື່ ແລະ ໄດ້ຮັບຮອງຈາກສຽງສ່ວນຫລາຍຂອງສະມາຊິກກຸ່ມ

### ໂຄງຮ່າງການຈັດຕັ້ງກຸ່ມທ້ອນເງິນຂັ້ນບ້ານ




## 2) ການກຳນົດ ໜ້າທີ່ຮັບຜິດຊອບຂອງຄະນະກຳມະການກຸ່ມທ້ອນເງິນ:

**ຜູ້ອຳນວຍຄວາມສະດວກສະເໜີ:**

ການແບ່ງປັນໜ້າທີ່ຮັບຜິດຊອບໃຫ້ຄະນະກຳມະການຂອງກຸ່ມເພື່ອຊ່ວຍໃຫ້ກຳມະການຮັບຜິດຊອບ, ບໍ່ມີການເຮັດວຽກແບບຊ້ຳຊ້ອນ ແລະ ປະຢັດເວລາ ເພາະວ່າກຳມະການບໍ່ມີເງິນເດືອນ ແລະ ຕ້ອງໄດ້ເຮັດວຽກເພື່ອກຸ່ມໂດຍການເສັຽສະຫລະ.ການແບ່ງໜ້າທີ່ຂອງແຕ່ລະກຸ່ມອາດຈະມີຄວາມແຕກຕ່າງກັນ, ເນື່ອງຈາກ

ວ່າຈຳນວນກຳມະການບໍ່ຄືກັນເຊັ່ນ: ບາງກຸ່ມ 3 ຄົນ, ບາງກຸ່ມ 5 ຄົນ ອີງຕາມຈຳນວນສະມາຊິກຂອງກຸ່ມມີໜ້ອຍຫລາຍ. (ສະເໜີຕັດອອກ)

## ຖາມ: <u>ໜ້າທີ່ລວມຂອງຄະນະກຳມະການມີຄືແນວໃດແດ່ ?</u>

- ຮັບຜິດຊອບລວມດ້ານແນວຄິດ ແລະ ການຈັດຕັ້ງ
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ
- ຮັບຜິດຊອບບັນຊີ-ການເງິນ ແລະ ພັນທະຂອງກຸ່ມ.
- ປຸກລະດົມ,ປຶກສາຫາລື, ແກ້ໄຂທຸກບັນຫາທີ່ເກີດຂື້ນພາຍໃນກຸ່ມ.
- ເປັນເຈົ້າການໃນການວາງແຜນການເພື່ອຄວາມໝັ້ນຄົງ ແລະ ນຳຜົນປະໂຫຍດສູງສຸດມາສູ່ສະມາຊິກເພື່ອຊ່ວຍພັດທະນາກຸ່ມ ແລະ ສັງຄົມໝູ່ບ້ານເທື່ອລະກ້າວ.

## <u>ປະທານກຸ່ມ ຮັບຜິດຊອບຫັຍງແດ່?</u>

1. **<u>ປະທານກຸ່ມ:</u>** ຮັບຜິດຊອບລວມ, ປະສານງານກັບທຸກພາກສ່ວນ, ສະຫລຸບລາຍງານ, ວາງແຜນການດຳເນີນງານຂອງກຸ່ມ.
2. **<u>ຮອງປະທານກຸ່ມ:</u>** ຮັບຜິດຊອບບັນຊີການເງິນຂອງກຸ່ມ, ຈົດ ແລະ ລົງລາຍເຊັນໃສ່ປື້ມເງິນຝາກປະຢັດປະຈຳຕົວສະມາຊິກ, ບັນທຶກເງິນທ້ອນລົງໃສ່ບັນຊີຂອງກຸ່ມ, ລວບລວມເງິນທ້ອນທີ່ທ້ອນໄດ້ແຕ່ລະເດືອນ ແລະ ມອບໃຫ້ຄັງເງິນສົດຂອງກຸ່ມ.
3. **<u>ກຳມະການ 1:</u>** ຮັບຜິດຊອບຄັງເງິນສົດ, ຮັບເງິນສົດຈາກທຸກບັນຊີຂອງກຸ່ມ ແລະ ນຳເງິນສົດໄປຝາກເຂົ້າບັນຊີຂອງກຸ່ມຢູ່ທະນາຄານ,ໄປຖອນເງິນຢູ່ທະນາຄານ,ຈ່າຍເງິນໃຫ້ສະມາຊິກຜູ້ທີ່ໄດ້ອະນຸມັດໃຫ້ກູ້ຢືມເງິນ.
4. **<u>ກຳມະການ</u> 2:** ມີໜ້າທີ່ຮັບດອກເບັ້ຍ, ຕິດຕາມກວດກາຜູ້ກູ້ຢືມເງິນ, ນຳເກັບເງິນທີ່ສະມາຊິກບໍ່ທັນຊຳລະຕາມກຳນົດຄາດໝາຍ ແລະ ນຳເງິນສົດໄປມອບໃຫ້ຄັງເງິນສົດຂອງກຸ່ມ ແລະ ການຕະລາດ.
5. **<u>ກຳມະການ 3:</u>** ຮັບຜິດຊອບບັນຊີລວມ, ບັນຊີແຍກປະເພດ,ເປັນຜູ້ສະຫລຸບລາຍງານຂອງ ລາຍຮັບ ແລະ ລາຍຈ່າຍ ປະຈຳເດືອນ ແລະ ສະຫລຸບລາຍງານບັນຊີໃຫ້ພາກສ່ວນທີ່ກ່ຽວ ຂ້ອງ ຮອດສະມາຊິກທຸກຄົນຮັບຮູ້ນຳກັນ ແລະ ນຳເງິນສົດສ່ວນຍັງເຫລືອໄປມອບໃຫ້ຄັງເງິນ ສົດຂອງກຸ່ມ.

## 3) <u>ບັນຊີການເງິນຂອງກຸ່ມທ້ອນເງິນ:</u>

ການປະຕິບັດຫລັກການບັນຊີຂອງກຸ່ມຕ້ອງເໝາະສົມ, ຈະແຈ້ງເປີດເຜີຍ,ກວດສອບໄດ້, ຮູ້ຈັກທີ່ມາທີ່ໄປ ຂອງເງິນ, ລະອຽດລອບຄອບ, ຜ່ານລະບົບບັນຊີເງິນສົດ, ລາຍຈ່າຍຕ່າງໆ, ບັນຊີເງິນທ້ອນ, ບັນຊີເງິນກູ້ ບັນຊີເງິນຝາກຂອງ ສະມາຊິກ ແລະ ສະຫລຸບຖານະການເງິນປະຈຳແຕ່ລະເດືອນ.

## 4) <u>ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່:</u>

### ກ .<u>ສິດ ແລະ ໜ້າທີ່ ຂອງທີ່ປຶກສາ:</u>

1. ໃຫ້ຄຳປຶກສາຫາລື ບັນຫາຕ່າງໆທີ່ເກີດຂື້ນພາຍໃນກຸ່ມ.

2. ຕິດຕາມການເຄື່ອນໄຫວກິດຈະກຳຂອງກຸ່ມທຸກໄລຍະ.
3. ສຶກສາອົບຮົມດ້ານແນວຄິດການເມືອງ.

**ຂ .ສິດ ແລະ ໜ້າທີ່ ຂອງຫົວໜ້າກຸ່ມ:**

1. ມີສິດຮຽກຮ້ອງສະມາຊິກເຂົ້າຮ່ວມປະຊຸມແຕ່ລະເດືອນ.
2. ມີສິດຕັດສິນບັນຫາພາຍໃນກຸ່ມ ແລະ ຕຳນິຕິຊົມສະມາຊິກພາຍໃນກຸ່ມ.
3. ມີສິດຕິດຕາມກວດກາທາງດ້ານການເງິນ ແລະ ການດຳເນີນງານກິດຈະກຳຂອງກຸ່ມ.
4. ມີສິດຍ້ອງຍໍສະມາຊິກຜູ້ຫ້າວຫັນດີເດັ່ນ ແລະປະຕິບັດຕໍ່ສະມາຊິກຜູ້ກະທຳຜິດຕໍ່ຂໍ້ກຳນົດກົດລະບຽບຂອງກຸ່ມ.

**ຄ . ໜ້າທີ່ຂອງຫົວໜ້າກຸ່ມ:**

1. ຊີ້ນຳລວມທາງດ້ານສຶກສາອົບຮົມສະມາຊິກ.
2. ວິ້ງເຕັ້ນພົວພັນກັບທີ່ປຶກສາ ແລະ ການຈັດຕັ້ງຕ່າງໆ.
3. ສ້າງແຜນປະຈຳເດືອນ, 3 ເດືອນ , 6 ເດືອນ ແລະ ແຜນປີ.
4. ນຳພາສະມາຊິກເຕົ້າໂຮມເປັນປົກກະຕິ 1 ເທື່ອຕໍ່ 1 ເດືອນ.
5. ສຳຫລວດກວດກາເງິນຝາກ ,ເງິນກູ້ , ໂດຍກຳນົດເອົາວັນທີ ...........ເປັນວັນເປີດ ແລະ ກຳນົດເອົາວັນທີ ..................ເປັນວັນປິດບັນຊີກຸ່ມຂອງທຸກໆເດືອນ.
6. ຕິດຕາມກວດກາກິດຈະກຳຂອງສະມາຊິກເປັນປະຈຳ.
7. ລາຍງານແບບປາກເປົ່າ ແລະ ມີລາຍລັກອັກສອນ.
8. ສະຫລຸບ ແລະ ລາຍງານຜົນການປະຕິບັດກິດຈະກຳ( ລາຍງານໃຫ້ບ້ານ, ແລະ ເມືອງ)

**ງ. ສິດຂອງຮອງຫົວໜ້າກຸ່ມ:**

1. ພົວພັນກັບຫົວໜ້າໜ່ວຍທຸກໆຄັ້ງ ໃນການຈັດຕັ້ງປະຕິບັດກອງປະຊຸມເພື່ອປະສານສົມທົບກັບສະມາຊິກ.
2. ມີສິດປຶກສາຫາລືບັນຫາຕ່າງໆກັບຫົວໜ້າພ້ອມດ້ວຍສະມາຊິກ.
3. ມີສິດຕັດສິນບັນຫາຕ່າງໆແທນຫົວໜ້າກຸ່ມ ເວລາຫົວໜ້າກຸ່ມບໍ່ຢູ່( ວ່າການແທນ).

**ຈ. ໜ້າທີ່ຂອງຮອງຫົວໜ້າກຸ່ມ:**

1. ຊ່ວຍວຽກຫົວໜ້າກຸ່ມ ( ວ່າການແທນ) .
2. ເຂົ້າຮ່ວມປຶກສາຫາລືການວາງແຜນການດຳເນີນງານຂອງກຸ່ມ.
3. ຮັບຜິດຊອບບັນຊີການເງິນ, ຄັງເງິນສົດ (ຂາເຂົ້າ ຂາອອກ).
4. ມີໜ້າທີ່ພົວພັນກັບທີມງານຂອງເມືອງ
5. ຊອກຕະຫລາດຈຳໜ່າຍ ແລະ ຄວບຄຸມດ້ານລາຄາພາຍໃນ.
6. ສະຫລຸບລາຍງານດ້ານການເງິນ ແລະ ຜົນຂອງການດຳເນີນງານກິດຈະກຳຂອງກຸ່ມ .

**ສ . ສິດ ແລະ ໜ້າທີ່ຂອງຮອງຄະນະກຳມະການ:**

1. ເປັນ ຜູ້ຊ່ວຍວຽກຫົວໜ້າ ແລະ ຮອງຂອງກຸ່ມ( ວຽກດ້ານບໍລິຫານ ແລະ ດ້ານບໍລິການ).

**ຊ . ສິດ ຂອງສະມາຊິກກຸ່ມ:**

2. ມີສິດສະເໜີຄຳຄິດຄຳເຫັນໃນການປັບປຸງການຈັດຕັ້ງຂອງກຸ່ມ.
3. ມີສິດເພີ້ມຕື່ມຫລືຕັດອອກໃນຂໍ້ກຳນົດກົດລະບຽບຕ່າງໆຂອງກຸ່ມ.
4. ມີສິດສະເໜີກວດກາທາງດ້ານການບັນຊີ ແລະ ການເງິນຂອງກຸ່ມ.
5. ມີສິດສະເໜີເລືອກຕັ້ງຫົວໜ້າຊຸດໃໝ່ (ຖ້າຫາກວ່າຫົວໜ້າຜູ້ເກົ່າຖືກຍົກຍ້າຍຫລື ຜິດກົດລະບຽບຂອງກຸ່ມທີ່ວາງໄວ້)

**ຍ . <u>ໜ້າທີ່ຂອງສະມາຊິກກຸ່ມ:</u>**

1. ເຂົ້າຮ່ວມປະຊຸມທຸກຄັ້ງ.
2. ປະສານສົມທົບ ແລະ ປຶກສາຫາລືບັນຫາຕ່າງໆພາຍໃນກຸ່ມ
3. ເຂົ້າ ຮ່ວມປຶກສາຫາລື,
4. ເຂົ້າຮ່ວມການວາງແຜນ
5. ເຂົ້າຮ່ວມຂະບວນການແກ້ໄຂບັນຫາ.
6. ເຂົ້າຮ່ວມການແບ່ງສິດຜົນປະໂຫຍດ
7. ເຂົ້າຮ່ວມການກວດກາປະເມີນຜົນ.

ໂຄງຮ່າງການຈັດຕັ້ງກຸ່ມທ້ອນເງິນ ພ້ອມດ້ວຍກຳນົດພາລະບົດບາດ, ສິດ ແລະໜ້າທີ່ ຂອງທີ່ປຶກສາ, ຫົວໜ້າກຸ່ມ, ຮອງກຸ່ມ , ກຳມະການ ແລະ ສະມາຊິກກຸ່ມມີສິດນຳໃຊ້ ແລະ ປະຕິບັດຕົວຈິງນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກວ່າກຸ່ມຈະມີການປ່ຽນແປງໃໝ່.

## 5) <u>ການກຳນົດລະບຽບ ຫລັກການ ແລະ ມາດຕະການຂອງກຸ່ມທ້ອນເງິນ:</u>

**1.2. ກຳນົດເວລາ 1:30 ນາທີ**

**1.3. ຜູ້ອຳນວຍຄວາມສະດວກ ນຳພາຊາວບ້ານຮ່າງກົດລະບຽບ ແລະ ມາດຕະການຂອງກຸ່ມ ໂດຍປະຕິບັດຕາມຂັ້ນຕອນ ຫຼື ຕັ້ງຄຳຖາມໃຫ້ກຸ່ມດັ່ງນີ້:**



- ຕັດສິນໃຈຕົກລົງຈຳນວນເງິນທີ່ຈະທ້ອນໃນແຕ່ລະໄລຍະ ເປັນອາທິດ ຫຼື ເດືອນ ?
- ດອກເບ້ຍຂອງກຸ່ມ ໃນເວລາຕ້ອງຢືມເງິນຈາກກຸ່ມ ແລະ ອັດຕາເປີເຊັນ ແຕ່ລະກິດຈະກຳຂອງການກູ້ຢືມ ?
- ຈະເກັບເງິນແນວໃດ ແລະ ໃຜຈະເປັນຜູ້ເກັບ ?
- ຈະຈັດກອງປະຊຸມກຸ່ມແນວໃດ, ເລີ້ມຈາກເຮືອນໃຜກ່ອນ ?
- ຈະບັນທຶກມະຕິຕົກລົງກອງປະຊຸມແນວໃດ ໃຜຈະເປັນຜູ້ບັນທຶກກ່ອນ?
- ກໍລະນີບໍ່ສາມາດຈ່າຍຕົ້ນທຶນຄືນຈະເຮັດແນວໃດ ?
- ກໍລະນີເງິນຕົກເຮ່ຍເສຍຫາຍຈະເຮັດແນວໃດ ?
- ເພື່ອເປັນການສ້າງຄວາມເຂັ້ມແຂງໃຫ້ສະມາຊິກກຸ່ມ ມີວິທີແນວໃດ?
- ກຳນົດເວລາໃນການຈັດກອງປະຊຸມຈັກເທື່ອຕໍ່ເດືອນ ຫຼື ຕໍ່ອາທິດ ?
- ຖ້າກໍລະນີ ມີເງິນເພີ້ມຂຶ້ນຫລາຍ ບໍ່ມີຜູ້ກູ້ຢືມ ແຕ່ຕ້ອງການໃຫ້ກອງທຶນເຕີບໃຫຍ່ຂະຫຍາຍຕົວ ຈະມີວິທີໝູນວຽນພັດປ່ຽນກັນກູ້ຢືມເງິນແນວໃດ?
- ຖ້າມີເງິນຫລາຍເກີນຄວາມຕ້ອງການຢືມ ຈະເຮັດແນວໃດ?

## 6) ການຄຸ້ມຄອງບໍລິຫານ ກຸ່ມ:

ເພື່ອເປັນການຄຸ້ມຄອງບໍລິຫານກຸ່ມໃຫ້ໄດ້ດີ ການຈັດກອງປະຊຸມສະຫລຸບຖອດຖອນບົດຮຽນຈຶ່ງແມ່ນວຽກງານໜຶ່ງ ທີ່ຊາວບ້ານຈະຕ້ອງໄດ້ເອົາໃຈໃສ່ ໂດຍຜູ້ຈັດກອງປະຊຸມ ອາດຈະແມ່ນໜ່າທີ່ຮັບຜິດຊອບຂອງທີ່ປຶກສາແລະຄະນະ ປະສານງານກຸ່ມທອ້ນເງິນຂັ້ນບ້ານ, ສະນັ້ນ ເພື່ອຄວາມເປັນເອກະພາບ ຊາວບ້ານ ແລະ ສະມາຊິກກຸ່ມທ້ອນເງິນແຕ່ລະທ່ານຈະຕ້ອງໄດ້ ຕົກລົງກັນດັ່ງນີ້:

## ການຈັດກອງປະຊຸມ

ຜູ້ອຳນວຍຄວາມສະດວກ ໃຫ້ຄຳອະທິບາຍວ່າ: ເພື່ອການໂປ່ງໃສ ແລະ ສາມາດກວດສອບໄດ້ ທັງເປັນການເປີດເຜີຍບັນຊີ ແລະ ມີການແລກປ່ຽນບົດຮຽນ ປະສົບການ ໃນການຈັດຕັ້ງປະຕິບັດ ເພື່ອຈະສ້າງຄວາມກ້າວໜ້າ ໃຫ້ກຸ່ມທ້ອນເງິນພາຍໃນບ້ານຂອງພວກທ່ານ, ການປະຊຸມລວມມີປະຊຸມກຳມະການປະຈຳເດືອນ ປະຊຸມສະມາຊິກປະຈຳເດືອນ ຫລື 3 ເດືອນ ຫລື 6 ເດືອນ ແລະ ກອງປະຊຸມໃຫຍ່ຄົບຮອບ 1 ປີ, ດັ່ງນັ້ນ ພວກທ່ານຄິດວ່າ ມີຄວາມຈຳເປັນທີ່ຈະຈັດກອງປະຊຸມແນວໃດ ໃນບ້ານຂອງພວກທ່ານ?.

### 6.1 ການປະຊຸມກຳມະການ:

ຈະມີຂຶ້ນກ່ອນມື້ທ້ອນເງິນ ຫລື ເວົ້າວ່າມື້ປະຊຸມປະຈຳເດືອນຂອງກຸ່ມປະມານ 3 ມື້. ກຳມະການທຸກ ຄົນແຈ້ງຄວາມຄືບໜ້າ ແລະ ອຸປະສັກທີ່ຕົນໄດ້ຮັບຜິດຊອບ, ອະນຸມັດປ່ອຍກູ້ ສຳລັບຜູ້ທີ່ຈະກູ້ຢືມເງິນ ແລະ ພິຈາລະນາເປັນເອກກະພາບ ແກ້ໄຂທຸກບັນຫາຂອງກຸ່ມ, ສະຫລຸບທຸກເນື້ອໃນນຳໄປປຶກສາກຸ່ມ.

### 6.2 ການປະຊຸມກຸ່ມ:

ປະຊຸມປະຈຳເດືອນຈະຈັດຂື້ນພາຍໃນມື້ທ້ອນເງິນຂອງກຸ່ມ, ກຳມະການມີໜ້າທີ່ແຈ້ງບັນຊີເປີດເຜີຍໃຫ້ສະມາຊິກທຸກຄົນຊາບນຳ,ການອະນຸມັດເງິນກູ້ , ການຮັບຟັງການສະເໜີຈາກສະມາຊິກ, ກອງປະຊຸມທຸກຄັ້ງຕ້ອງເຊີນທີ່ປຶກສາເຂົ້າຮ່ວມນຳ ແລະ ມີການບັນທຶກກອງປະຊຸມທຸກຄັ້ງ.

### 6.3 ການປະຊຸມປະຈຳປີ

ກອງປະຊຸມປະຈຳປີເປັນກອງປະຊຸມທີ່ສຳຄັນ ເພາະສະມາຊິກຈະໄດ້ຮັບຊາບການ ລາຍງານການເຄື່ອນໄຫວວຽກງານຂອງກຸ່ມເຊັ່ນ: ການເງິນ ,ກິດຈະກຳຕ່າງໆ , ຈຸດດີ , ຈຸດອ່ອນ , ການແບ່ງປັນ ຜົນ ແລະ ການເລືອກຕັ້ງຄະນະກຳມະການໃໝ່.

### 6.4 ການສະຫລຸບ:

ການປະຊຸມແມ່ນມີຄວາມສຳຄັນທີ່ສຸດເພາະວ່າຈະໄດ້ໃຫ້ສະມາຊິກທ້ອນເງິນຢ່າງສະໝ່ຳສະເໝີ ມີໂອກາດໄດ້ພົບປະລົ້ງເລີຍກັນ,ຖາມຄວາມສຸກທຸກ, ແລະ ແກ້ໄຂບັນຫາຮ່ວມກັນ, ພ້ອມທັງໄດ້ຮັບ ການສຶກສາອົບຮົມດ້ານແນວຄິດຈາກຄະນະກຳມະການ ແລະໄດ້ຄົ້ນຄວ້າປັບປຸງກົດລະບຽບ ແລະ ແບບແຜນວິທີເຮັດວຽກທີ່ບໍ່ສອດຄ່ອງ ແລະ ພ້ອມກັນຮ່ວມວາງແຜນການພັດທະນາສັງຄົມ ແລະ ໝູ່ບ້ານ ເພື່ອຢາກໃຫ້ກຸ່ມມີຄວາມຍືນຍົງ ແລະ ເຕີບໃຫຍ່ຂະຫຍາຍ ຕົວຢ່າງມີປະສິດທິພາບນັ້ນ , ມັນມີຄວາມຈຳເປັນທີ່ສຸດທີ່ຈະໄດ້ຮຽກຮ້ອງໃຫ້ສະມາຊິກກຸ່ມທຸກຄົນຕ້ອງໄດ້ຮ່ວມຈິດຮ່ວມໃຈກັນ ປະຕິບັດຕາມຂໍ້ກຳນົດກົດລະບຽບທີ່ກ່າວມາຂ້າງເທິງນັ້ນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----=====000=====-----

ແຂວງ....................

ເມືອງ...................

ບ້ານ....................

ໜ່ວຍ.................

# ຂໍ້ກຳນົດກົດລະບຽບ ຂອງ ກຸ່ມ ................

1. ສະມາຊິກທຸກຄົນຕ້ອງປະຕິບັດຕາມຂໍ້ກຳນົດກົດລະບຽບຂອງກຸ່ມທີ່ໄດ້ເຮັດຮ່ວມກັນ ແລະ ວາງອອກ.
2. ສະມາຊິກທຸກຄົນຕ້ອງໄດ້ເຂົ້າຮ່ວມປະຊຸມ 1 ເທື່ອຕໍ່ເດືອນ ໂດຍກຳນົດເອົາວັນທີ ............ຂອງທຸກໆເດືອນ.
3. ສະມາຊິກທຸກຄົນຕ້ອງໄດ້ເຂົ້າຮ່ວມການວາງແຜນການດຳເນີນກິດຈະກຳຂອງກຸ່ມ.
4. ການປະຊຸມຂອງກຸ່ມທຸກໆຄັ້ງຕ້ອງມີການບັນທຶກເຊັ່ນ: ວັນທີ ,ເດືອນ, ປີ ຂອງມື້ປະຊຸມ ແລະ ຊຽນຈຸດປະສົງຂອງກອງປະຊຸມພ້ອມດ້ວຍເນື້ອໃນກອງປະຊຸມ ແລະ ບັນທຶກຈຳນວນຜູ້ເຂົ້າຮ່ວມ ແລະ ຜູ້ຂາດກອງປະຊຸມ , ພ້ອມດ້ວຍໝາຍເຫດການຂາດກອງປະຊຸມ.
5. ສະມາຊິກທຸກຄົນຕ້ອງນຳໃຊ້ທຶນໃຫ້ຖືກເປົ້າໝາຍຂອງກິດຈະກຳ.
6. ສະມາຊິກທຸກຄົນພາຍຫລັງທີ່ໄດ້ຮັບທຶນກູ້ຢືມແລ້ວຕ້ອງດຳເນີນກິດຈະກຳໂລດ(ບໍ່ຕ້ອງປະເງິນໄວ້ລ້າໆ).
7. ສະມາຊິກທຸກຄົນຕ້ອງດຸໝັ່ນ ແລະ ຫ້າວຫັນ.
8. ສະມາຊິກທຸກຄົນຕ້ອງປະຕິບັດກິດຈະກຳໃຫ້ຖືກຕ້ອງຕາມເຕັກນິກຂອງວິຊາ ການ.
9. ສະມາຊິກທຸກຄົນຕ້ອງຮັບຜິດຊອບໃນການເສັຽຫາຍຂອງຕົ້ນທຶນ ແລະ ດອກເບັ້ຽທີ່ຢືມໄປ.
10. ການຊື້ຂາຍຕ້ອງໃຫ້ສົມເຫດສົມຜົນ ໂດຍມີຄະນະກຳມະການກວດກາດ້ານລາຄາ.
11. ໃຫ້ແມ່ຍິງໄດ້ມີໂອກາດເຂົ້າມາຮ່ວມໃນຂະບວນການຂອງກຸ່ມ 60%ຂື້ນໄປຫາ 100%.
12. ສະມາຊິກທຸກຄົນຕ້ອງໄດ້ຝາກປະຢັດຕາມກຳນົດທີ່ຕົກລົງກັນໄວ້ໃນທຸກເດືອນ.
13. ສະມາຊິກທຸກຄົນຕ້ອງໄດ້ຮັບຜົນແບ່ງປັນຕາມອັດຕາເງິນຝາກຂອງຕົນຕໍ່ປີຫລືຕາມຜະລິດຕະພັນ.
14. ກຳນົດການກູ້ຢືມເງິນໃຫ້ອີງໃສ່ຕາມກິດຈະກຳຂອງຄອບຄົວເປົ້າໝາຍຫລື ກຸ່ມເປົ້າໝາຍ.
15. ສະມາຊິກທຸກຄົນຕ້ອງໄດ້ກຳນົດດອກເບັ້ຽຮ່ວມກັນເພື່ອເປັນເອກະພາບກັນ.
16. ຖ້າຜູ້ກູ້ຢືມຫາກກາຍສັນຍາການສົ່ງຄືນໂດຍບໍ່ມີເຫດຜົນຈະຄິດໄລ່ດອກເບຽເພີ້ມຂື້ນທໍ່ໃດ.......% . ບໍ່ວ່າພາຍໃນ ແລະ ພາຍນອກ.

**<u>ມະຕິຕົກລົງ ການກຳນົດດອກເບັ້ຽ ແລະ ການສົ່ງທຶນຄືນ ຂອງກຸ່ມທ້ອນເງິນກຸ່ມ.............ບ້ານ..............</u>**

**<u>ສະມາຊິກພາຍໃນກຸ່ມກູ້ຢືມ:</u>**

1. ຢືມເພື່ອການ ເຈັບເປັນຄິດໄລ່ດອກເບັ້ຽທີ່ໃດ......%
2. ຢືມເພື່ອການຜະລິດ ຄິດໄລ່ດອກເບັ້ຽທີ່ໃດ.......... . %
3. ຢືມເພື່ອການເຮັດທຸລະກິດຄິດໄລ່ດອກເບັ້ຽທີ່ໃດ......%

**<u>ສະມາຊິກນອກກຸ່ມນະໂຍບາຍໃຫ້ຢືມ:</u>**

1. ຢືມເພື່ອການ ເຈັບເປັນຕາເປັນຄິດໄລ່ດອກເບັ້ຽທີ່ໃດ......%
2. ຢືມເພື່ອການຜະລິດ ຄິດໄລ່ດອກເບັ້ຽທີ່ໃດ.......... . %
3. ຢືມເພື່ອການເຮັດທຸລະກິດຄິດໄລ່ດອກເບັ້ຽທີ່ໃດ...........%

**<u>ມາດຕາການຂອງກຸ່ມ:</u>**

**1 ຕໍ່ສະມາຊິກຜູ້ດີເດັ່ນແມ່ນຈະໄດ້ປະຕິບັດນະໂຍບາຍໃຫ້ເປັນວັດຖຸ ຫລື ຂອງຂັວນ.**

**2 ຕໍ່ສະມາຊິກຜູ້ທີ່ລະເມີດກົດລະບຽບ:**

- ຄັ້ງທີ 1 ສຶກສາອົບຮົມ ( ສະມາຊິກ + ຫົວໜ້າກຸ່ມ )
- ຄັ້ງທີ 2 ສຶກສາອົບຮົມ ( ສະມາຊິກ + ຫົວໜ້າ +ທີ່ປຶກສາ )
- ຄັ້ງທີ 3 ສົ່ງຕົ້ນທຶນຄືນ ແລະ ເກັບເອົາດອກເບ້ຍ ພ້ອມທັງປັບໃໝ ........% ຕໍ່ເດືອນ ແລະລຶບຊື່ອອກຈາກການເປັນສະມາຊິກຂອງກຸ່ມ, (ໃນກໍລະນີບໍ່ລົງລອຍກັນທາງກຸ່ມທ້ອນເງິນພ້ອມທີ່ປຶກສາກຸ່ມຈະໄດ້ຍຶດຊັບຂອງຜູ້ກ່ຽວຕາມມູນຄ່າຄວາມເປັນຈິງ ແລະ ກຸ່ມມີສິດຮ້ອງຟ້ອງສານຍຸຕິທຳຕາມກົດໝາຍບ້ານເມືອງ ) .

**<u>ລະບຽບຕໍ່ສະມາຊິກຜູ້ທີ່ຈະເຂົ້າມາໃໝ່ຄວນມີເງື່ອນໄຂດັ່ງນີ້.</u>**

- ຕ້ອງເປັນຄົນກັບບ້ານ ( ຖ້ານອກບ້ານຕ້ອງໃຫ້ຮູ້ທີ່ມາທີ່ໄປ ແລະ ມີຜູ້ຮັບປະກັນຄັກແນ່ ).
- ຕ້ອງເປັນຄົນດຸໝັ່ນ,ຕ້ອງເປັນຜູ້ຕ້ອງການເຮັດແທ້ທຳຈິງ ແລະ ມີຄວາມສະໝັກໃຈດ້ວຍຕົນເອງ
- ຕ້ອງເປັນຄົນຊື່ສັດບໍລິສຸດ.
- ເປັນຄອບຄົວທີ່ຂາດເຂີນ.
- ບໍ່ເຄີຍເປັນໜີ້ສິນຄຸມເຄືອມາກ່ອນ.
- ເປັນຜູ້ທີ່ປະຕິບັດກົດລະບຽບຂອງກຸ່ມ ແລະ ຂອງບ້ານເມືອງ.

**ທຸກ**ຂໍ້ກຳນົດກົດລະບຽບຕ່າງໆຂອງກຸ່ມສະບັບນີ້ລ້ວນແຕ່ແມ່ນສະມາຊິກທຸກຄົນພາຍໃນກຸ່ມເປັນຜູ້ວາງອອກ ແລະ ຈະຕ້ອງເປັນຜູ້ຈັດຕັ້ງປະຕິບັດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ທີ່ບ້ານ................ວັນທີ .....................201...**

**<u>ຢັ້ງຢືນຈາກນາຍບ້ານ</u>** **<u>ພະຍານ</u>** **<u>ຫົວໜ້າກຸ່ມ</u>**

**<u>ເຫັນດີ ແລະ ຮັບຮູ້ຈາກຫົວໜ້າຫ້ອງວ່າການເມືອງ</u>** **<u>ຜູ້ປະສານງານໂຄງການ</u>**

# ບົດທີ 3

## ຄວາມສຳຄັນຂອງການຝາກເງິນທ້ອນ

**<u>ຄຳນິຍາມ:</u>** ຕາມປົກກະຕິແລ້ວການຝາກເງິນທ້ອນແມ່ນສາມາດກຳນົດໄດ້ມາຈາກສ່ວນທີ່ເຫລືອໂດຍອີງໃສ່ລາຍຮັບ,ຫລືເວົ້າຢ່າງນຶ່ງວ່າການປະຢັດແມ່ນມາຈາກສ່ວນເກີນທີ່ບໍ່ໄດ້ຈ່າຍຂອງລາຍຮັບເຊັ່ນ: ລາຍຮັບ - ລາຍຈ່າຍ = ສ່ວນເກີນຂອງລາຍຮັບທີ່ຈ່າຍອອກໄປນ້ອຍກວ່າລາຍຮັບ(ຫລືເວົ້າອີກຢ່າງນຶ່ງກໍ່ແມ່ນໃຊ້ຈ່າຍນ້ອຍລົງ,ດັ່ງນັ້ນ ຈຶ່ງວ່າເຂົາເຈົ້າທ້ອນເງິນໄດ້. ການປະຢັດເງິນອາດເປັນຄວາມຕັ້ງໃຈ ຫລື ຕ້ອງໄດ້ຝຶກຕົນເອງເປັນປະຈຳ.

### 1. <u>ຄວາມສຳຄັນຂອງການຝາກປະຢັດ:</u>

ຄວາມສຳຄັນຂອງການຝາກປະຢັດ ຫລື ການທ້ອນເງິນ ອາດເບິ່ງໄດ້ໃນ 2 ທັດສະນະຄື:

1. ຈາກທັດສະນະຂອງຜູ້ຝາກປະຢັດ.
2. ຈາກທັດສະນະຂອງເສດຖະກິດຊົນນະບົດ.

### 2. <u>ຈາກທັດສະນະຂອງຜູ້ຝາກ:</u>

ມີຄຳເລົ່າກັນມາແຕ່ດົນນານວ່າ: ໃຜສາມາດຄວບຄຸມທຶນໄດ້ ຜູ້ນັ້ນເປັນຜູ້ຄຸມອົງດົນຕຣີໄດ້ ແລະ ມີຄຳສຸພາສິດໄດ້ກ່າວໄວ້ວ່າ:ຖ້າເຈົ້າເອົາມີຈົກຖົງຄົນອື່ນເຈົ້າກໍ່ຕ້ອງຍ່າງຕາມຫລັງເຂົາທຸກບາດກ້າວ ອັນນີ້ ມັນເປັນຄວາມຈິງ. ການຝາກປະຢັດ ແມ່ນເປັນພື້ນຖານໃຫ້ແກ່ຄວາມຈິງໃນຄວາມພະຍາຍາມກ້າວໄປເຖິງເປັນເຈົ້າຕົນເອງ. ພວກເຮົາຫລາຍຄົນເຄີຍເວົ້າວ່າຜູ້ທຸກຍາກບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຂອງເຂົາເຈົ້າໄດ້ໃນການບໍລິໂພກປະຈຳວັນ ແລະ ເຂົາເຈົ້າຈະເອົາຫຍັງມາທ້ອນ. ແຕ່ຕົວຈິງແລ້ວເຂົາເຈົ້າມີຄວາມຕັ້ງໃຈຢາກຈະເປັນເຈົ້າຂອງຊັບສົມບັດຕ່າງໆ ແລະ ມີ ຄວາມຕື່ນຕົວໃນການປະຢັດເພື່ອໄດ້ມາຊຶ່ງວັດຖຸທີ່ເຂົາເຈົ້າຕ້ອງການ.ຕາມຄວາມເປັນຈິງແລ້ວ ໂຄງການທ້ອນເງິນຊາວບ້ານແມ່ນໄດ້ສ້າງເງື່ອນໄຂໃຫ້ຜູ້ທຸກຍາກສ້າງທຶນຮອນຂອງຄອບ ຄົວ ໂດຍການນຳໃຊ້ຊັບພະຍາກອນຂອງເຂົາເຈົ້າເອງ ດ້ວຍການສະສົມສ່ວນເກີນ ແລະ ຫລຸດ ຜ່ອນການໃຊ້ຈ່າຍປະຈຳວັນລົງ.

### 3. <u>ການຝາກປະຢັດສາມາດໃຫ້ອຳນາດດ້ານການເງິນແກ່ເຂົາເຈົ້າໂດຍການໃຫ້:</u>

- **3.1** ໃຫ້ທາງເລືອກ.
- **3.2** ໃຫ້ຄວາມປອດໄພ ແກ່ຄວາມບໍ່ແນ່ນອນຂອງອະນາຄົດ.
- **3.3** ສະໜອງຄວາມຕ້ອງການທີ່ຈຳເປັນເຊັ່ນ: ດ້ານຢາປົ່ນປົວພະຍາດ, ການເຈັບເປັນ ,ການເຄື່ອນໄຫວດ້ານສັງຄົມ, ແລະ ບຸນສົນກິນທານຕ່າງໆ.
- **3.4** ສະສົມເງິນໂດຍມີການສ່ຽງໜ້ອຍ.
- **3.5** ເພື່ອສະໜອງຄວາມຕ້ອງການປະຈຳວັນ ແລະໃຊ້ເປັນທຶນສຳລັບການລົງທຶນຫລືສ້າງທຶນຮອນ
- **3.6** ເປັນລະບົບການປະກັນໄພສັງຄົມ.

ສ່ວນການລະດົມເງິນຝາກຂອງທະນາຄານການຄ້າຕ່າງໆໃນເຂດຊົນນະບົດນັ້ນແມ່ນການຮົ່ວໄຫລຂອງ ແຫລ່ງທຶນຈາກຊົນນະບົດເຂົ້າສູ່ຕົວເມືອງ. ມີແຕ່ການປະຢັດ ຫລືການທ້ອນເງິນຂອງຊາວ ບ້ານເທົ່ານັ້ນ ທີ່ພໍເໝາະສົມ ແລະສາມາດສະກັດ ກັ້ນໄດ້ຕໍ່ບັນຫາດັ່ງກ່າວ. ການຝາກປະຢັດເປັນເງິນສົດ ແລະ ສາ ມາດເຮັດໃຫ້ການລົງທຶນໃຫ້ແກ່ຄອບຄົວທີ່ທຸກຍາກໄດ້ມີໂອກາດ ແລະ ຈະນຳໄປເຖິງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊົນນະບົດທີ່ຍືນຍົງ.ໂດຍການກະທົບທີ່ເປັນການກະຕຸ້ນໃຫ້ກາຍເປັນຄົນທີ່ສະ ຫລາດ ແລະ ນຳໃຊ້ພູມປັນຍາຂອງຕົນທີລະກ້າວ,ດັ່ງຄຳສຸພາສິດຂອງບູຮານເພີ່ນກ່າວໄວ້ວ່າ: ( ລ້ານກີບຢູ່ພາກນ້ຳ ຢ່າໄດ້ອ່າວຄະນິງຫາ ຫ້າພັນກີບຢູ່ໃນມືຮີບກຳເອົາໄວ້).

<u>**ໝາຍເຫດ:**</u> ( ຕາຕະລາງການຕິດຕາມການຝາກເງິນຂອງສະມາຊິກ ແລະ ປື້ມເງິນຝາກປະຢັດ

. ປະຈຳຕົວໄດ້ຕິດຂັດມາຂ້າງຫລັງນີ້)

## ຕາຕະລາງບັນທຶກ **ການທ້ອນເງິນຝາກ**

| ເລກທີ ສ/ຊ | ຊື່ແລະນາມ ສະກຸນ | ລາຍການ ລະອຽດ | ຈ/ນ ເງິນ ຍອດຍົກມາ | ລາຍການທ້ອນເງິນຝາກຂອງສະມາຊິກແຕ່ລະເດືອນ ປະຈຳປີ 201...... | | | | | | | | | | | | ລວມເງິນ ທັງໝົດຕໍ່ປີ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | |
| 1 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 2 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 3 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 4 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 5 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 6 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 7 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 8 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| 9 | | ເງິນທ້ອນ | | | | | | | | | | | | | | |
| | | ອັດຕາຄິດໄລ່ | | | | | | | | | | | | | | |
| | | ດອກເບັ້ຍ | | | | | | | | | | | | | | |
| **ລວມເງິນປະຈຳເດືອນ** | | | | | | | | | | | | | | | | |

**ລາຍການຝາກເງິນ** ໜ້າ ທີ 2

| ວັນ,ເດືອນ,ປີ | ລາຍການ | ຝາກ | ຖອນ | ຍັງເຫລືອ | ຜູ້ຕິດຕາມ |
|---|---|---|---|---|---|
| | ຍອດຍົກມາ | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| ແບ່ງປັນຜົນປະຈຳປີ | | | | | |
| ຍອດຍົກໄປ | | | | | |

------------------------------------------------------------------------------------------------

**ລາຍການກູ້ຢືມເງິນ** ໜ້າ 3

| ວັນ,ເດືອນ,ປີ | ກູ້ຢືມ | ຊຳລະຄືນ | ດອກເບັ້ຽ | ໜີ້ຍັງຄ້າງ | ກຳນົດວັນສົ່ງ | ຜູ້ຮັບເງິນ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| ຍອດຍົກໄປ | | | | | | |

# ບົດທີ 4

## ການປ່ອຍເງິນໃຫ້ສະມາຊິກກຸ່ມ ກູ້ຢືມ

ການປ່ອຍເງິນໃຫ້ສະມາຊິກກູ້ຢືມນັ້ນແມ່ນການກຳນົດກິດຈະກຳສ້າງລາຍໄດ້ທີ່ມີຜົນກຳໄລໃຫ້ສະມາຊິກ. ການເຄື່ອນໄຫວສ້າງລາຍໄດ້ແມ່ນການເຄື່ອນໄຫວຊຶ່ງຜົນຂອງການປະຕິບັດທີ່ຈະນຳລາຍໄດ້ມາໃຫ້ໂດຍກົງ ໂດຍສະ ເພາະ ລາຍໄດ້ທີ່ເປັນເງິນສົດ.ການປ່ອຍເງິນໃຫ້ສະມາຊິກກູ້ຢືມແມ່ນມີຄວາມຮຽກຮ້ອງໃຫ້ສະມາຊິກ ມີຄວາມຕັ້ງໃຈ ແລະ ຕັດສິນໃຈທີ່ຈະນຳຄວາມຊຳນິຊຳນານໃນການເຮັດກິດຈະກຳໃດນຶ່ງເພື່ອສ້າງລາຍຮັບ ໃຫ້ແກ່ຄອບຄົວ. ຫລືວ່າ ການ ເລືອກກຳນົດກິດຈະກຳທີ່ສ້າງລາຍໄດ້ທີ່ມີຜົນກຳໄລ. ອັນນີ້ແມ່ນບາດກ້າວທຳ ອິດໃນການນຳໄປສູ່ຄວາມສຳເລັດຂອງໂຄງການທ້ອນເງິນຂອງຊາວບ້ານ. ການປ່ອຍເງິນໃຫ້ສະມາຊິກກູ້ຢືມ ນັ້ນ ແມ່ນມີຄວາມສຳຄັນຫລາຍເພາະມັນເປັນແຫລ່ງທີ່ມາຂອງຜົນກຳໄລ ມາ ໃຫ້ກຸ່ມກໍຄືມາໃຫ້ສະມາຊິກທຸກ ຄົນ. ສະນັ້ນ, ພວກເຮົາຈຶ່ງເວົ້າໄດ້ວ່າພວກເຮົາ ທັງເປັນເຈົ້າທຶນ ແລະ ທັງເປັນລູກຄ້າ. ດັ່ງນັ້ນ,ກ່ອນຈະກູ້ຢືມ ເງິນເຮັດກິດຈະກຳໃດນຶ່ງ,ເຮົາຄວນສຶກສາຄວາມເປັນໄປໄດ້ຂອງຕະຫລາດ,ອັນນັ້ນມັນແມ່ນບາດກ້າວທີ່ ສຳຄັນ.

<u>**ຍົກຕົວຢ່າງການສຶກສາການຕະຫລາດ:**</u> ຖ້າຢາກເຮັດກິດຈະກຳຊື້ໄກ່ຂາຍໄກ່, ກໍ່ຕ້ອງສຶກສາການຕະຫລາດ ສາກ່ອນວ່າຕະຫລາດໄກ່ລາດມີບໍ? ຢູ່ໃສ? ແລະ ລາຄາດີສຳໃດ? ຫລືຈະເຮັດຕຳ່ຫູກກໍຄືກັນມີຕະຫລາດບໍ? ແລະ ຫູກປະເພດໃດ?

<u>**ຕົວຢ່າງ:**</u> ຖ້າເຮົາຢືມເງິນຈາກກຸ່ມ 400.000 ກີບ ໄປຊື້ໄກ່ໂຕລະ 40.000ກີບ ແລະ ຈະໄດ້ໄກ່ຈຳນວນ 10 ໂຕ ແລະລາວເອົາໄປຂາຍຕະຫລາດ ໄດ້ໂຕລະ 50.000 ກີບ ສະແດງວ່າລາວຈະໄດ້ ເງິນທັງທຶນ ແລະກຳໄລທັງ ໝົດ 500.000 ກີບ ແລະລາວລົບຄ່າລົດອອກ 20.000 ກີບ ແລະລາວຍັງເຫລືອເງິນຢູ່ 480.000 ກີບ. ຖ້າ ຫັກຕົ້ນທຶນອອກ ຈຳນວນ 400.000 ກີບເພື່ອໄວ້ເປັນທຶນໃນມື້ຕໍ່ໄປ. ສະແດງວ່າລາວໄດ້ກຳໄລໃນມື້ນັ້ນ 80.000 ກີບ. ຖ້າວ່າລາວຫາກໄປຂາຍໄກ່ 15 ມື້ ແລະ 15 ມື້ລາວພັກຜ່ອນຫລືວ່າຊອກເວລາຫາເລາະຊື້ໄກ່ ໄວ້ ສະແດງວ່າ 80.000x15 ມື້= 1.200.000 ກີບ/ເດືອນ ແລະ ມາຫັກເປີເຊັນໃຫ້ກຸ່ມທີ່ຢືມເງິນຈາກກຸ່ມ 5% ( ສົມມຸດ) ໃນ 400.000 ກີບ = 20.000 ກີບ ແລະ ເງິນຈະຍັງເຫລືອ 1.180.000 ກີບ. ສ່ວນ 20.000 ກີບ ຄ່າດອກເບ້ຍນັ້ນເຮົາກໍຈະໄດ້ຮັບສ່ວນແບ່ງໃນການປັນຜົນອີກດ້ວຍ,ເພາະວ່າເຮົາກໍ່ມີເງິນທ້ອນໃນກຸ່ມນັ້ນ ເໝືອນກັນ.

- <u>**ດອກເບັ້ຽຈາກເງິນທີ່ກູ້ຢືມ:**</u>
- <u>**ດອກເບັ້ຽແມ່ນຫຍັງ?**</u>

1. ແມ່ນເງິນທີ່ໄດ້ຈາກການເກັບເອົາກຳໄລຈາກເງິນທີ່ສະມາຊິກຢືມເງິນກອງທຶນໄປໝູນວຽນ.
2. ແມ່ນເພື່ອຕອບສະໜອງຄ່າໃຊ້ຈ່າຍການດຳເນີນງານ ຫລື ຄ່າບໍລິການ.
3. ເພື່ອຄວາມສ່ຽງໃນການຜູ້ກູ້ຢືມສົ່ງຊ້າ.
4 . ເພື່ອຄຸນຄ່າຂອງລາຄາເງິນເຟີ້ ຫລື ລາຄາເງິນຕົກຕຳ່.

5. ເພື່ອສ້າງລາຍຮັບໃຫ້ກາຍເປັນທຶນຮອນເພີ້ມຂື້ນ ແລະ ເພື່ອນຳໄປແບ່ງປັນຜົນ.

6 . ເພື່ອຄວາມຍືນຍົງຂອງກຸ່ມ.

- **<u>ວິທີຄິດໄລ່ດອກເບັ້ງ</u>**

  ດອກເບັ້ງຄິດໄລ່ເປັນອັດຕາສ່ວນມາຈາກຕົ້ນທຶນເງິນທີ່ໄດ້ເບີກຈ່າຍໄປ ແລະ ຄິດໄລ່ເປັນເດືອນ. ການຄິດໄລ່ດອກເບັ້ງ ແມ່ນເອົາອັດຕາດອກເບັ້ງຄູນໃຫ້ມູນຄ່າຕົ້ນທຶນເງິນກູ້ຢືມທີ່ໄດ້ເບີກຈ່າຍໄປແລ້ວເອົາມາຫານໃຫ້ 100.

  **<u>ສູດຄິດໄລ່:</u>** ຄ່າດອກເບັ້ງທັງໝົດ = ຕົ້ນທຶນເງິນທີ່ກູ້ຢືມໄປ x ອັດຕາດອກເບັ້ງ / 100

  **<u>ຕົວຢ່າງ:</u>** ຄ່າດອກເບັ້ງທັງໝົດ = 100.000 ກີບ x 5% / 100 = 5.000 ກີບ

  **<u>ສະນັ້ນ, ຄ່າດອກເບັ້ງທັງໝົດ</u> = 5.000 ກີບ**

**<u>ໝາຍເຫດ:</u>** **(ຕາຕະລາງການຕິດຕາມການປ່ອຍເງິນກູ້ ແລະ ປື້ມຕິດຕາມການບັນທຶກປະຈຳຕົວການກູ້ຢືມເງິນໄດ້ຂັດຕິດມາຂ້າງລຸ່ມນີ້ )**

# ຕາຕະລາງບັນທຶກການປ່ອຍ ແລະ ການເກັບເງິນກູ້

| ເລກລະຫັດສ/ຊ | ລາຍຊື່ສະມາຊິກ | ກິດຈະກຳທີ່ຈະເຮັດ | ບັນທຶກ ການປ່ອຍເງິນກູ້ໃຫ້ສະມາຊິກ | | | | ບັນທຶກການເກັບເງິນກູ້ຈາກສະມາຊິກ | | | | | ລາຍເຊັນຜູ້ສົ່ງເງິນກູ້ແຕ່ລະຄັ້ງ |
|---|---|---|---|---|---|---|---|---|---|---|---|---|
| | | | ວັນທີກູ້ຢືມ | ໄລຍະກູ້ | ຈ/ນ ເງິນປ່ອຍກູ້ | ດອກເບັ້ຍ % ຕໍ່ເດືອນ | ວັນທີ ສົ່ງກູ້ | ຈຳນວນເງິນສົ່ງຄືນ | | ຈຳນວນເງິນຍັງຄ້າງ | | |
| | | | | | | | | ເງິນຕົ້ນທຶນ | ເງິນດອກເບັ້ຍ | ເງິນຕົ້ນທຶນ | ເງິນດອກເບັ້ຍ | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

ລາຍການຝາກເງິນ ໜ້າ ທີ 2

| ວັນ,ເດືອນ,ປີ | ລາຍການ | ຝາກ | ຖອນ | ຍັງເຫລືອ | ເຊັນຜູ້ຕິດຕາມ |
|---|---|---|---|---|---|
| | ຍອດຍົກມາ | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| ປັນຜົນປະຈຳປີ | | | | | |
| ຍອດຍົກໄປ | | | | | |

-----------------------------------------------------------------------------------------

ລາຍກາກູ້ຢືມເງິນ ໜ້າ 3

| ວັນ,ເດືອນ,ປີ | ກູ້ຢືມ | ຊຳລະຄືນ | ດອກເບັ້ຍ | ໜີ້ຍັງຄ້າງ | ກຳນົດວັນສົ່ງ | ຜູ້ຮັບເງິນ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| ຍອດຍົກໄປ | | | | | | |

# ບົດທີ 5

## ການເກັບກູ້ເງິນຄືນ ຈາກສະມາຊິກ ຂອງ ກຸ່ມທີ່ຢືມເງິນໄປ

ການເກັບກູ້ເງິນຄືນແມ່ນການຊຳລະເງິນຄືນທັງຕົ້ນທຶນ ແລະ ດອກເບັ້ຽທີ່ໄດ້ກຳນົດໄວ້ຕາມສັນຍາກ່ອນກູ້ຢືມ ແລະ ເງິນດັ່ງກ່າວແມ່ນເປັນເງິນທີ່ໄປໝູນໃຫ້ຜູ້ອື່ນໄດ້ໝູນວຽນຕໍ່ໄປ.ສ່ວນດອກເບັ້ຽນັ້ນແມ່ນຈະເປັນລາຍຮັບຂອງກຸ່ມຫລືເຮັດໃຫ້ກຸ່ມຂະຫຍາຍຕົວຂື້ນໄປເລື້ອຍໆ.ສະນັ້ນ,ການເກັບເງິນຄືນແມ່ນກິດຈະກຳທີ່ສຳຄັນເພາະເຮັດໃຫ້ມີຄວາມສາມະຄີ,ຄວາມໄວ້ເນື້ອເຊື່ອໃຈກັນ ແລະ ທຸກຄົນກໍໄດ້ຊົມໃຊ້ດ້ວຍກັນມີຜົນປະໂຫຍດຮ່ວມກັນ.

1. <u>ການທີ່ບໍ່ສົ່ງເງິນກູ້ຈະມີຜົນຕາມມາຄື:</u>

- ການທີ່ບໍ່ຊຳລະເງິນກູ້ຄືນແມ່ນຜິດລະບຽບຂອງຫລັກການ ການເງິນ.
- ຜູ້ອື່ນຮຽນແບບ ແລະ ເປັນຕົວອ້າງອີງທີ່ບໍ່ຊຳລະເງິນຄືນ ແລະ ຈະເຮັດໃຫ້ການທ້ອນ ເງິນຂອງບ້ານພົບກັບຄວາມຫຍຸ້ງຍາກ
- ການຊຳລະໜີ້ຈະຊ່ວຍໃຫ້ຜູ້ກູ້ຢືມເພີ້ມຂື້ນ ແລະ ເປັນການເພີ້ມທະວີການພັດທະນາເຈົ້າຂອງເອງ.
- ຄວາມທຸກຍາກຈະເພີ້ມຂື້ນ ຖ້າຫາກວ່າຜູ້ກູ້ບໍ່ມີຄວາມສາມາດໃນການຊຳລະໜີ້ປົກກະຕິ.
- ຖ້າຫາກຕາມໃຈຜູ້ທີ່ນີ້ງແລ້ວ,ຜູ້ທີ ສອງກໍຢາກໄດ້ຄືກັນອີກ ແລະ ຈະເຮັດໃຫ້ສະພາບດັ່ງກ່າວຂະຫຍາຍອອກວົງກວ້າງ,ໃນທີ່ສຸດກໍຄືກຸ່ມແຕກກັນ.

2. <u>ມາດຕາການທີ່ຈຳເປັນ ເພື່ອແກ້ໄຂການຊຳລະທີ່ບໍ່ກົງກັບເວລາ:</u>

- ຖ້າມີການຊຳລະບໍ່ກົງເວລາຕ້ອງຊອກຫາສາຍເຫດ ແລະ ເປັນເຈົ້າການໃນການເກັບກູ້ຄືນ.
- ໃຫ້ມີຄວາມພະຍາຍາມຮັບປະກັນການເຂົ້າຮ່ວມກອງປະຊຸມເປັນປົກກະຕິຂອງສະມາຊິກ.
- ຊອກຮູ້ສະມາຊິກຜູ້ທີ່ລະເມີດກົດລະບຽບ ແລະ ລະບຽບການ,ຊອກຫາວິທີແກ້ໄຂດ້ວຍການປຶກສາຫາລືພາຍໃນກຸ່ມ.
- ຕ້ອງມີການຝຶກອົບຮົມກ່ຽວກັບກົດລະບຽບຂອງກຸ່ມເລື້ອຍໆເພື່ອທົບທວນຄວາມຈຳ.
- ໃຫ້ມີການປຶກສາຫາລືກັບອຳນາດການປົກຄອງທຸກຂັ້ນຕອນຂອງການຈັດຕັ້ງທີ່ກ່ຽວຂ້ອງ.

ສະນັ້ນ,ເງິນກູ້ຢືມທີ່ບໍ່ທັນຊຳລະ ເລີ້ມຕົ້ນເສັຍຄຸນນະພາບຂອງມັນ ແລະ ເຮັດໃຫ້ເງິນກູ້ມີລັກສະນະສ່ຽງໄພ ຫລື ເຂົ້າສູ່ຂັ້ນອັນຕະລາຍ ຈະເກີດຂື້ນກັບກຸ່ມ. ຄວາມຊັກຊ້າໃນການຊຳລະຄືນເງິນກູ້ຢືມເຮັດໃຫ້ລາຍຈ່າຍຂອງເງິນກູ້ເພີ້ມຂື້ນ ແລະເປັນການຍາກທີ່ຈະກຸ້ມຄ່າລາຍຈ່າຍດ້ວຍລາຍໄດ້.ການຊຳລະບໍ່ກົງເວລາມີຜົນກະທົບກວ້າງຂວາງ, ມັນເຮັດໃຫ້ການທົດແທນໜີ້ສິນສ່ຽງໄພ.ສະນັ້ນ,ເພື່ອບໍ່ໃຫ້ເງິນມີການສ່ຽງໄພຄື: ສະມາຊິກທຸກຄົນຕ້ອງປະຕິບັດຕາມກົດລະບຽບຂອງກຸ່ມທີ່ໄດ້ກຳນົດເອົາໄວ້ ຈື່ງເຮັດໃຫ້ກຸ່ມທ້ອນເງິນມີຄວາມຍືນຍົງຕະຫລອດໄປ.

ຕາຕະລາງບັນທຶກການປ່ອຍ ແລະ ການເກັບເງິນກູ້

| ເລກລະຫັດສ/ຊ | ລາຍຊື່ສະມາຊິກ | ກິດຈະກຳທີ່ຈະເຮັດ | ບັນທຶກ ການປ່ອຍເງິນກູ້ໃຫ້ສະມາຊິກ | | | | ບັນທຶກການເກັບເງິນກູ້ຈາກສະມາຊິກ | | | | | ລາຍເຊັນ ຜູ້ສົ່ງເງິນກູ້ແຕ່ລະຄັ້ງ |
|---|---|---|---|---|---|---|---|---|---|---|---|---|
| | | | ວັນທີກູ້ຢືມ | ໄລຍະກູ້ | ຈ/ນ ເງິນປ່ອຍກູ້ | ດອກເບ້ຍ % ຕໍ່ເດືອນ | ວັນທີ ສົ່ງກູ້ | ຈຳນວນເງິນສົ່ງຄືນ | | ຈຳນວນເງິນຍັງຄ້າງ | | |
| | | | | | | | | ເງິນຕົ້ນທຶນ | ເງິນດອກເບັ້ຍ | ເງິນຕົ້ນທຶນ | ເງິນດອກເບັ້ຍ | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |
| | | | | | | | | | | | | |

**ລາຍການຝາກເງິນ** ໜ້າ ທີ 2

| ວັນ,ເດືອນ,ປີ | ລາຍການ | ຝາກ | ຖອນ | ຍັງເຫລືອ | ຜູ້ຕິດຕາມ |
|---|---|---|---|---|---|
| | ຍອດຍົກມາ | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| ຍອດຍົກໄປ | | | | | |

---

ລາຍກາກູ້ຢືມເງິນ ໜ້າ 3

| ວັນ,ເດືອນ,ປີ | ກູ້ຢືມ | ຊຳລະຄືນ | ດອກເບັ້ຍ | ໜີ້ຍັງຄ້າງ | ກຳນົດວັນສົ່ງ | ຜູ້ຮັບເງິນ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| ຍອດຍົກໄປ | | | | | | |

# ບົດທີ 6

# ບັນຊີສະຫລຸບເງິນສົດ ທີ່ມີຕົວຈິງ ແບບເປີດເຜີຍ

1. **ການສະຫລຸບການເງິນແບບເປີດເຜີຍແມ່ນຫຍັງ ?**
   - ການສະຫລຸບການເງິນ ແມ່ນພາລະບົດບາດທີ່ສໍາຄັນໃນການຈັດຕັ້ງກຸ່ມທ້ອນເງິນຂອງຊາວບ້ານ.
   - ແມ່ນບໍ່ເກີດແຫ່ງຄວາມສາມະຄີອັນມະຫາສານຂອງກຸ່ມ ແລະ ຍັງເປັນເຂັມວັດແທກວ່າກຸ່ມມີ ຄວາມເຂັ້ມແຂງ ຫລື ວ່າມີຄວາມອ່ອນແອ.
   - ແມ່ນພະລັງແຫ່ງຄວາມໄວ້ເນື້ອເຊື່ອໃຈ ແລະ ບໍລິສຸດຜຸດຜ່ອງຕໍ່ການຈັດຕັ້ງຂອງກຸ່ມທ້ອນເງິນຂອງຊາວບ້ານ.

2. **ເປັນຫຍັງຈຶ່ງມີການສະຫລຸບການເງິນ ?**
   - ເພື່ອສະແດງບັນຊີເປີດເຜີຍຕໍ່ສະມາຊິກກຸ່ມທຸກໆຄົນໃຫ້ຮັບຮູ້ເຖິງຈໍານວນເງິນທີ່ເຮົາມີຢູ່ໃນຄັງສະສົມຂອງກຸ່ມ, ໃຫ້ຮັບຮູ້ວ່າຈໍານວນເງິນທ້ອນຂອງສະມາຊິກມີເທົ່າໃດ,ຈໍານວນເກັບກູ້ມີທໍ່ໃດ? ,ຈໍານວນປ່ອຍກູ້ມີເທົ່າໃດ ແລະ ເງິນສົດຍັງເຫລືອມີເທົ່າໃດ ?
   - ຜູ້ເຮັດບັນຊີຕ້ອງເປີດເຜີຍ ແລະ ປະກາດໃຫ້ສະມາຊິກໄດ້ຮັບຮູ້ ແລະ ສະມາຊິກທຸກຄົນມີສິດກວດກາ ແລະ ຮູ້ຢ່າງຈະແຈ້ງນໍາກັນທຸກໆເດືອນ ວ່າຈໍານວນເງິນສົດຍັງເຫລືອເທົ່າໃດ? ມີຜູ້ຢືມໄປເທົ່າໃດ ແລະ ເງິນໄວ້ແຮສຸກເສີນໃນຍາມຈໍາເປັນມີເທົ່າໃດ?.

3. **ຖ້າບໍ່ເຮັດບັນຊີເປີດເຜີຍ ຫລື ບໍ່ສະຫລຸບການເງິນ, ມັນຈະເກີດບັນຫາໃດຕາມມາ ?**
   - ຈະມີບັນຫາເກີດຂຶ້ນແນ່ນອນ.
   - ຈະເຮັດໃຫ້ສະມາຊິກພາຍໃນກຸ່ມບໍ່ເຊື່ອໝັ້ນຕໍ່ການນໍາພາຂອງກຸ່ມ.
   - ສະມາຊິກມີແນວຄິດລະແວງສົງໃສ ວ່າຜູ້ບໍລິຫານກຸ່ມຈະໂກງກິນເງິນຂອງສະມາຊິກ.
   - ເຮັດໃຫ້ບັນຊີເປີດເຜີຍບໍ່ຈະແຈ້ງ, ສະມາຊິກທຸກຄົນບໍ່ຮູ້ຕົ້ນປາຍສາຍເຫດຂອງເງິນພາຍໃນກຸ່ມວ່າ: ຈໍານວນປ່ອຍກູ້ມີເທົ່າໃດ? ເຮັດກິດຈະກໍາຫຍັງ? ຈໍານວນເງິນທີ່ຢືມໄປມີເທົ່າໃດ? ສຸດທ້າຍກໍເກີດການສົງໃສກັນເກີດຂຶ້ນ?
   - ເຮັດໃຫ້ກຸ່ມທ້ອນເງິນບໍ່ມີຄວາມຍືນຍົງ ແລະ ໃນທີ່ສຸດກໍຄືການແຕກກຸ່ມ.

4. **ຂັ້ນຕອນວິທີສະຫລຸບການເງິນແບບເປີດເຜີຍ(ບັນຊີເປີດເຜີຍ)**

   **<u>ຂັ້ນຕອນທີ 1:</u>**

   - ຜູ້ຮັບຜິດຊອບສະຫລຸບຖານະການເງິນປະຈໍາເດືອນຕ້ອງໄດ້ສັງລວມເອົາຕົວເລກເງິນທ້ອນຂອງສະມາຊິກທັງໝົດເຂົ້າຫ້ອງ **<u>ລາຍຮັບ</u>** ວ່າມີສະມາຊິກມາຝາກເງິນທ້ອນມີເທົ່າໃດ ( ສັງລວມເອົາມາຈາກປຶ້ມຕິດຕາມການທ້ອນເງິນຂອງສະມາຊິກປະຈໍາເດືອນວ່າມີເທົ່າໃດ)

- ເກັບເງິນທີ່ສະມາຊິກກູ້ຢືມໄປໄດ້ຈັກຄົນ ແລະ ເປັນຕົວເລກເທົ່າໃດ(ສັງລວມມາຈາກປື້ມ ຕິດຕາມການປ່ອຍເງິນກູ້ ແລະ ການເກັບເງິນກູ້ ປະຈຳເດືອນ).

**ຂັ້ນຕອນທີ 2**

ຜູ້ຮັບຜິດຊອບບສະຫລຸບການເງິນປະຈຳເດືອນຕ້ອງໄດ້ສັງລວມເອົາຕົວເລກເງິນປ່ອຍໃຫ້ສະມາຊິກ ກູ້ຢືມ ຂອງສະມາຊິກທັງໝົດເຂົ້າຫ້ອງ **ລາຍຈ່າຍ** ວ່າມີສະມາຊິກມາກູ້ຢືມມີເງິນເທົ່າໃດ ( ສັງລວມເອົາມາຈາກ ປື້ມຕິດຕາມການປ່ອຍເງິນໃຫ້ສະມາຊິກປະຈຳເດືອນວ່າມີເທົ່າໃດ)

**ຂັ້ນຕອນທີ 3**:

ສັງລວມລາຍຮັບທັງໝົດ ແລະ ເງິນສົດທີ່ຍົກຍອດມາຈາກເດືອນກ່ອນມີເທົ່າໃດ ແລ້ວ ມາລົບໃຫ້ລາຍຈ່າຍທີ່ ໄດ້ປ່ອຍກູ້ທັງໝົດ ແລະ ລາຍຈ່າຍອື່ນໆທັງໝົດ ວ່າເງິນທີ່ເຫລືອໃນບັນຊີຍັງເຫລືອເທົ່າໃດ.ໃນເມື່ອສະ ຫລຸບ ແລ້ວໆກໍ່ຕ້ອງແຈ້ງໃຫ້ຄະນະກຳມະການ ແລະ ສະມາ ຊິກທຸກຄົນຮັບຮູ້ນຳກັນ ແລະ ໃຫ້ນຳເອົາເງິນສົດໃຫ້ ນາຍຄັງເງິນສົດເປັນຜູ້ເກັບມ້ຽນໄວ້ ຫລືໄປຝາກທະນາຄານໄວ້ ແລ້ວແຕ່ມີຄວາມສະດວກ .

5. **ຜູ້ທີ່ກຳຄັງເງິນສົດ:**

ຜູ້ທີ່ກຳຄັງເງິນສົດແມ່ນມີໜ້າທີ່ຮັບເອົາເງິນສົດທີ່ສັງລວມໄດ້ຈາກຜູ້ສະຫລຸບຖານະການເງິນມາຄຸ້ມຄອງ ແລະ ຮັບຜິດຊອບໃນການໃຊ້ຈ່າຍໃນງວດເດືອນຕໍ່ໄປ ແລະ ໃຫ້ຮູ້ທີ່ໄປທີ່ມາຂອງເງິນວ່າ,ວັນທີທີ່ໃດ ໄດ້ຮັບເງິນສົດຈາກໃຜ ແລະ ຈຳນວນທີ່ໃດ,ຈ່າຍໃຫ້ໃຜ? ໃນວັນທີທີ່ໃດ? ແລະເງິນສົດຍັງເຫລືອຕົວຈິງເທົ່າ ໃດ? ຜູ້ສະຫລຸບການເງິນ ແລະ ຜູ້ກຳຄັງເງິນສົດແມ່ນໄດ້ເບິ່ງການຮັບ ແລະ ການຈ່າຍນຳກັນເພື່ອ ຄວາມເປັນລະບຽບຮຽບຮ້ອຍ ແລະ ປ້ອງກັນການຫລົງລືມ ແລະ ຄວາມຜິດພາດ. ຖ້າຫາກວ່າເງິນ ມີການຕົກເຮັ່ຽເສັຍຫາຍແມ່ນຜູ້ຖືເງິນສົດເປັນຜູ້ຮັບຜິດຊອບໃນຈຳນວນທີ່ຂາດໄປ.

<u>ສະຫລຸບການເງິນ,ສັງລວມ ລາຍຮັບ - ລາຍຈ່າຍ ແລະ ເງິນສົດຍັງເຫລືອຕົວຈິງ</u>

<u>ປະຈຳເດືອນ</u>............../201...

| ລ/ດ | ລາຍການຕ່າງໆທີ່ໄດ້ຮັບ | ຈຳນວນເງິນ | ລ/ດ | ລາຍການຕ່າງໆທີ່ໄດ້ຈ່າຍ | ຈຳນວນເງິນ |
|---|---|---|---|---|---|
| 1 | | | 1 | | |
| 2 | | | 2 | | |
| 3 | | | 3 | | |
| 4 | | | 4 | | |
| 5 | | | 5 | | |
| 6 | | | 6 | | |
| 7 | | | 7 | | |
| 8 | | | 8 | | |
| 9 | | | 9 | | |
| 10 | | | 10 | | |
| 11 | | | 11 | | |
| 12 | | | 12 | | |
| 13 | | | 13 | | |
| 14 | | | 14 | | |
| 15 | | | 15 | | |
| ລວມເງິນທີ່ໄດ້ຮັບຈາກກິດຈະກຳຕ່າງໆ | | | | | |
| ລວມເງິນສົດທີ່ຍົກຍອດມາຈາກເດືອນກ່ອນ | | | | | |
| <u>ລວມລາຍຮັບທັງໝົດ:</u> | | | | <u>ລວມລາຍຈ່າຍທັງໝົດ:</u> | |

ລວມລາຍຮັບທັງໝົດ - ລວມລາຍຈ່າຍທັງໝົດ = ເປັນເງິນສົດທີ່ຍັງເຫລືອ ແລະຍົກຍອດໄປເດືອນໜ້າ

.......................... - ............................... = .................................................................

<u>ຜູ້ສະຫລຸບ</u>

<u>ປະທານກຸ່ມ:</u>...................................... ....

<u>ຄະນະກຳມະການ</u>: 1 .............................

2 ..............................

3 ...............................

ທີ່ບ້ານ..........................ວັນທີ........./........./201....

# ບັນຊີ ລາຍຮັບ-ລາຍຈ່າຍ ຂອງຄັງເງິນສົດ

## ຂອງກຸ່ມທ້ອນເງິນ....................

| ລ/ດ | ວ.ດ.ປ | ລາຍການຕ່າງໆ | ລາຍຮັບ(+) | (ລາຍຈ່າຍ(-) | ຍັງເຫລືອ | ຜູ້ເຊັນຈ່າຍ | ຜູ້ເຊັນຮັບ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |

# ບົດທີ່ 7
## ວິທີຄິດໄລ່ການແບ່ງປັນຜົນກຳໄລຕາມຫຸ້ນເງິນທ້ອນໃຫ້ສະມາຊິກແຕ່ລະຄົນ

ກຳໄລແມ່ນຜົນທີ່ໄດ້ຮັບຈາກການຮ່ວມແຮງຮ່ວມໃຈກັນຂອງສະມາຊິກແຕ່ລະຄົນໃນການເອົາເງິນມາທ້ອນໂຮມກັນເປັນກອງທຶນໜຶ່ງຂື້ນມາ ຫລືເອີ້ນວ່າກຸ່ມທ້ອນເງິນຂອງຊາວບ້ານ ຫລືວ່າໄດ້ທຶນອື່ນມາສົບທົບທຶນເຊັ່ນ:ເງິນຊ່ວຍເຫລືອລ້າຈາກອົງການຈັດຕັ້ງອື່ນໆ ຫລື ເງິນທຶນທີ່ປະກອບສ່ວນຈາກການບໍລິຈາກ ຈາກພາຍນອກໂດຍບໍ່ມີການຜູກມັດຕ່າງໆ. ແລ້ວທຶນຈຳນວນດັ່ງກ່າວເອົາໄປໝູນໃຫ້ສະມາຊິກກູ້ຢືມໄປເຮັດກິດຈະກຳຕ່າງໆເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ທຶນດັ່ງກ່າວນັ້ນແມ່ນໄດ້ໄປຊ່ວຍເຫລືອຜູ້ທີ່ທຸກຍາກບໍ່ມີທຶນຮອນໃນການທຳການຜະລິດ.ໃນເມື່ອໄດ້ຮັບທຶນດັ່ງກ່າວແລ້ວກໍໄດ້ເຮັດບົດບັນທຶກສັນຍາໃນການກູ້ຢືມ ແລະ ຄິດໄລ່ເປັນດອກເບັ້ຽ ຕາມ ກົດລະບຽບຂອງກຸ່ມທ້ອນເງິນ ແລະດອກເບັ້ຽດັ່ງກ່າວນັ້ນສະສົມໄວ້ໃນໜຶ່ງປີ ແລ້ວເອົາແບ່ງປັນກັນຫລືແບ່ງ ປັນຜົນກຳໄລ.

1. **ຈຳນວນທີ່ເອົາມາຄິດໄລ່ເປັນຕົ້ນທຶນມີ:**
   - ກ. ຈຳນວນລວມເງິນທ້ອນຂອງສະມາຊິກທັງໝົດໃນ 1 ປີ.
   - ຂ . ຈຳນວນເງິນຄ່າປື້ມປະຈຳຕົວທັງໝົດຂອງສະມາຊິກ.
   - ຄ .ຈຳນວນເງິນທີ່ໂຄງການສະໜັບສະໜູນທັງໝົດ.

   ສະນັ້ນ, ເຮົາຈິ່ງລວມເອົາເງິນທັງໝົດຄື (ກ+ຂ+ຄ) ມາລວມເຂົ້າກັນ ແລ້ວອອກມາເປັນຕົ້ນທຶນທັງໝົດຂອງກຸ່ມ.

2. <u>**ຈຳນວນທີ່ເອົາມາຄິດໄລ່ເປັນກຳໄລສຸດທິ:**</u>
   - ກ .ຈຳນວນລາຍຮັບທັງໝົດຂອງກຸ່ມໃນ 1 ປີ.
   - ຂ . ຈຳນວນຕົ້ນທຶນທັງໝົດຂອງກຸ່ມທີ່ເອົາມາຈາກຂໍ້ ທີ 1 (ກ ຂ ຄ ຂ້າງເທິງ).

   ສະນັ້ນ, ເຮົາຈິ່ງເອົາຂໍ້ ທີ 2 ( ກ ມາລົບ ຂ) ແລ້ວອອກມາເປັນກຳໄລສຸດທິທັງໝົດ

3. <u>**ການແບ່ງປັນຜົນກຳໄລສຸດທິອອກເປັນ 100% ແລະ ແບ່ງເປັນ 4 ພາກສ່ວນເຊັ່ນ:**</u>

| | |
|---|---|
| ກ - ພາກສ່ວນສະມາຊິກ | = 70% |
| ຂ - ພາກສ່ວນຕົ້ນທຶນຂອງກຸ່ມ | = 10% |
| ຄ - ພາກສ່ວນຄະນະກຳມະການ | = 15% |
| ງ - ພາກສ່ວນສັງຄົມບ້ານ | = 5% |

ການລະບຸຈຳນວນ ເປີເຊັນ(%) ນັ້ນແມ່ນຂື້ນກັບການຕົກລົງຂອງສະມາຊິກທັງໝົດເປັນຜູ້ຕົກລົງກັນເອງ , ອັນນີ້ແມ່ນລະບຸເປີເຊັນເປັນພຽງຂໍ້ສົມມຸດເທົ່ານັ້ນ.

4. <u>ວິທີແບ່ງປັນໃຫ້ພາກສ່ວນສະມາຊິກຂອງກຸ່ມຕາມຫຸ້ນເງິນທ້ອນຂອງສະມາຊິກທັງໝົດບ້ວງ 70%</u>

ຄືເອົາຈຳນວນບ້ວງກຳໄລ 70% ມາຫານໃຫ້ຈຳນວນເງິນທ້ອນຂອງສະມາຊິກທັງໝົດ ແລ້ວອອກມາເປັນຫົວໜ່ວຍຄິດໄລ່ ແລະ ເອົາມາຄູນໃຫ້ຈຳນວນເງິນທ້ອນຂອງແຕ່ລະຄົນ, ແລ້ວຜົນອອກມາກໍ່ຄືອັດຕາດອກເບັ້ຍປະຈຳປີ ຫລືຜົນແບ່ງປັນກຳໄລປະຈຳປີ.

## <u>ການຄິດໄລ່ແບບສົມມຸດ:</u>

**1) ຈຳນວນທີ່ເອົາມາຄິດໄລ່ເປັນຕົ້ນທຶນ:**

ກ- ຈຳນວນລວມເງິນທ້ອນຂອງສະມາຊິກທັງໝົດໃນ 1 ປີມີ: 1.500.000

ຂ - ຈຳນວນເງິນຄ່າປື້ມປະຈຳຕົວທັງໝົດຂອງສະມາຊິກ ມີ: 206.000.

ຄ - ຈຳນວນເງິນທີ່ໂຄງການສະໜັບສະໜູນທັງໝົດມີ: <u>3.000.000.</u>

**4.706.000 ກີບ**

ສະນັ້ນ, ເຮົາຈິ່ງລວມເອົາເງິນທັງໝົດຄື (ກ+ຂ+ຄ) ມາລວມເຂົ້າກັນ ແລ້ວອອກມາເປັນຕົ້ນທຶນທັງໝົດຂອງກຸ່ມ.

**2) <u>ຈຳນວນທີ່ເອົາມາຄິດໄລ່ເປັນກຳໄລສຸດທິ</u>: (ສົມມຸດ)**

ກ. ຈຳນວນລາຍຮັບທັງໝົດຂອງກຸ່ມໃນ 1 ປີ ມີ: = 6.706000.

ຂ. ຈຳນວນຕົ້ນທຶນທັງໝົດຂອງກຸ່ມທີ່ເອົາມາຈາກຂໍ້ ທີ 1 ຂ້າງເທິງມີ. = 4.706.000

ສະນັ້ນ, ເຮົາຈິ່ງເອົາຂໍ້ ( ກ ມາລົບ ຂໍ້ ຂ) ແລ້ວ ອອກມາເປັນກຳໄລສຸດທິທັງໝົດ

<u>ໂດຍ່າງ</u>: 6.706.000 - 4.706.000 = <u>**2.000.000 ກີບ**</u> (ກຳໄລສຸດທິ)

**3) <u>ການແບ່ງປັນຜົນກຳໄລສຸດທິໃນ 2.000.000 ກີບ,ເທົ່າກັບ 100% ຂອງຜົນກຳໄລ ,ແລ້ວມາແບ່ງເປັນ 4 ພາກສ່ວນຄື</u>:**

1 . ກຳໄລສຸດທິ = 2.000.000 ກີບ = 100 %

2 . ແບ່ງປັນໃຫ້ພາກສ່ວນສະມາຊິກ70% = <u>2.000.000 x 70 %</u>= 1.400.000 ກີບ
100

3 . ແບ່ງປັນໃຫ້ພາກສ່ວນກອງທຶນລວມ10% = <u>2.000.000 x10%</u> = 200.000 ກີບ .
. 100

4 . ແບ່ງປັນໃຫ້ພາກສ່ວນກຳມະການ 15% = <u>2.000.000 x 15%</u> = 300.000 ກີບ .
100

5 . ແບ່ງປັນພາກສ່ວນສັງຄົມບ້ານ 5% = <u>2.000.000 x 5%</u> = 100.000 ກີບ .
100

<u>**ໝາຍເຫດ:**</u> ການລະບຸຈຳນວນ ເປີເຊັນ(%) ນັ້ນແມ່ນຂື້ນກັບການຕົກລົງຂອງສະມາຊິກທັງໝົດເປັນຜູ້ຕົກລົງກັນເອງ , ອັນນີ້ແມ່ນລະບຸເປີເຊັນເປັນພຽງຂໍ້ສົມມຸດເທົ່ານັ້ນ.

## ວິທີການແບ່ງຜົນກໍາໄລໃຫ້ສະມາຊິກເງິນທ້ອນແຕ່ລະຄົນ

**ວິທີການແບ່ງປັນຜົນໃຫ້ພາກສ່ວນສະມາຊິກຂອງກຸ່ມຕາມຫຸ້ນເງິນທ້ອນທັງໝົດຂອງບ້ວງ 70%ມີດັ່ງນີ້:**

1 . ຄືເອົາຈໍານວນເງິນບ້ວງກໍາໄລ 70% = 1.400.000 ກີບມາຫານໃຫ້ຈໍານວນເງິນທ້ອນທັງໝົດ ຂອງສະມາຊິກ= 1.500.000 ກີບ = $\frac{1.400.000 \text{ ກີບ}}{1.500.000 \text{ ກີບ}}$ = 0.93 ຫົວໜ່ວຍຄິດໄລ່.

2 . ເອົາຫົວໜ່ວຍຄິດໄລ່ 0.93 **ມາຄູນ** ໃຫ້ຈໍານວນເງິນທ້ອນຂອງສະມາຊິກແຕ່ລະຄົນ ແລະຜົນ ອອກມາກໍ ຄືອັດຕາດອກເບ້ຍປະຈໍາປີ ຫລືຜົນແບ່ງປັນປະຈໍາປີ.

**ສົມມຸດ:** 1.ທ້າວ ກໍ ມີເງິນທ້ອນ = 60.000 ກີບ x 0.93 = 55.800 ກີບ.

2. ທ້າວ ຂໍ ມີເງິນທ້ອນ = 50.000 ກີບ x 0.93 = 46.500 ກີບ.

3. ທ້າວ ຄໍ ມີເງິນທ້ອນ = 35.000 ກີບ x 0.93 = 32.550 ກີບ.

ສະນັ້ນ, ວິທີຄິດໄລ່ດອກເບ້ຍໃຫ້ສະມາຊິກທຸກຄົນກໍເຮັດແບບຄິດໄລ່ໃຫ້ທ້າວ ກໍ, ຂໍ ແລະ ຄໍ.

**ໝາຍເຫດ:** ເວລາແບ່ງປັນຜົນແລ້ວນັ້ນໃຫ້ຈົດລົງບັນຊີປື້ມຕິດຕາມເງິນຝາກຫົວໃຫຍ່ ແລະ ປື້ມເງິນຝາກປະຈໍາຕົວ ໃສ່ໃນຫ້ອງດອກເບ້ຍ(ຕິດຄັດມາຂ້າງລຸ່ມນີ້).

ປຶ້ມບັນຊີເງິນຝາກປະຈຳຕົວ

ໜ້າ ທີ 2

| ວັນ,ເດືອນ,ປີ | ລາຍການ | ຝາກ | ຖອນ | ຍັງເຫລືອ | ຜູ້ຕິດຕາມ |
|---|---|---|---|---|---|
| | ຍອດຍົກມາ | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| | | | | | |
| ປັນຜົນປະຈຳປີ | | | | | |
| ຍອດຍົກໄປ | | | | | |

-----------------------------------------------------------------------------------------

<u>ລາຍກາກູ້ຢືມເງິນ</u> ໜ້າ 3

| ວັນ,ເດືອນ,ປີ | ກູ້ຢືມ | ຊຳລະຄືນ | ດອກເບັ້ຽ | ໜີ້ຍັງຄ້າງ | ກຳນົດວັນສົ່ງ | ຜູ້ຮັບເງິນ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| ຍອດຍົກໄປ | | | | | | |

## ແນວທາງການປົກປັກຮັກສາ, ການຄຸ້ມຄອງກຸ່ມໃຫ້ເຂັ້ມແຂງ ແລະມີຄວາມໝັ້ນຄົງຂອງກຸ່ມທ້ອນເງິນ

ການດຳເນີນງານຂອງກຸ່ມທ້ອນເງິນຈະມີຄວາມຈະເລີນກ້າວໜ້າ ແລະ ໝັ້ນຄົງແມ່ນເປັນປະໂຫຍດຕໍ່ສະມາຊິກໄດ້ນັ້ນກໍ່ຂື້ນຢູ່ກັບຄະນະກຳມະການບໍລິຫານກຸ່ມ ແລະ ສະມາຊິກນຳກັນຄື:

- **ຄະນະກຳມະການບໍລິຫານກຸ່ມ:**

1- ຕ້ອງມີຄວາມເສັຍສະລະ ແລະ ສະໝັກໃຈ.
2- ມີຄວາມກະຕືລືລົ້ນ ຕ້ອງການເຮັດວຽກເພື່ອກຸ່ມຕາມໜ້າທີ່ໆໄດ້ມອບໝາຍ,ມີແນວຄິດປະດິດສ້າງເພື່ອສ້າງສາ ພັດທະນາກຸ່ມໃຫ້ຈະເລີນກ້າວໜ້າ.
3- ມີຄວາມຊື່ສັດບໍລິສຸດ, ສະມາຊິກທຸກຄົນໃຫ້ຄວາມເຊື່ອໝັ້ນ ແລະ ໄວ້ໃຈ.
4- ມີລະບຽບວິໃນດີ, ມີເຫດຜົນ, ຮັບຟັງສຽງສ່ວນຫລາຍ.
5- ມີຄວາມຮັບຜິດຊອບສູງ, ດຸໝັ່ນ,ປະຢັດ ແລະເປັນຕົວແບບໃນການສ້າງສາພັດທະນາຄອບຄົວໃຫ້ແກ່ສະມາຊິກ ແລະມີຄວາມສຸພາບຮຽບຮ້ອຍ ຮັກແພງໝູ່ຄູ່.

- **ສະມາຊິກ:**

1- ຕ້ອງເຂົ້າຮ່ວມປະຊຸມກຸ່ມເປັນປະຈຳທຸກຄັ້ງ.
2- ຮ່ວມກັນເບິ່ງແຍງດູແລການເຮັດວຽກງານຂອງຄະນະກຳມະການຊ່ວຍກັນ,ບໍ່ແມ່ນມີແຕ່ຈັບຜິດກັນມີການບຳລຸງຮັກສາຊ່ວຍກັນ.
3- ທ້ອນເງິນກັບກຸ່ມເປັນປະຈຳທຸກໆເດືອນ.
4- ປະຕິບັດຕາມກົດລະບຽບ ແລະຂໍ້ຕົກລົງຕ່າງໆຂອງກອງປະຊຸມ.
5- ກູ້ຢືມເງິນຂອງກຸ່ມໄປລົງທຶນໃນທຸລະກິດຫລືກິດຈະກຳຕ່າງໆຂອງກຸ່ມຫລືໄປເຮັດອາຊີບເສີມເພື່ອພັດທະນາຖານະທາງເສດຖະກິດຂອງຄອບຄົວໃຫ້ດີຂື້ນ.
6- ສົ່ງຄືນເງິນກູ້ຢືມ ແລະ ດອກເບັ້ຽຕາມກຳນົດເວລາ.
7- ໃຫ້ຄວາມຮ່ວມມື ແລະ ເຂົ້າມີສ່ວນຮ່ວມໃນກິດຈະກຳຕ່າງໆຂອງກຸ່ມທຸກເທື່ອ.
8- ໃຫ້ກຽດຄະນະກຳມະການ ແລະ ສະມາຊິກນຳກັນບໍ່ເຂົ້າໄປກ້າວກ່າຍການເຮັດວຽກງານຂອງຄະນະກຳມະການ.
9- ມີເຫດຜົນ, ຮັບຟັງສຽງສ່ວນຫລາຍ ແລະ ຍອມຮັບມະຕິຂອງກອງປະຊຸມ.
10- ດຸໝັ່ນ ໃນການສ້າງເສດຖະກິດຄອບຄົວ ແລະ ຮູ້ຈັກປະຢັດ.

## ບັນຫາທີ່ມັກຈະເກີດຂຶ້ນເລື້ອຍໆ:

- ສະມາຊິກຂາດການທ້ອນເງິນບໍ່ເປັນປະຈຳທຸກເດືອນ.
- ສະມາຊິກບໍ່ສົ່ງຄືນເງິນກູ້ ແລະ ດອກເບັ້ຽຕາມກຳນົດເວລາ.
- ຄະນະກຳມະການໄດ້ກູ້ກ່ອນ ແລະ ໄດ້ກູ້ຫລາຍ.
- ຄະນະກຳມະການເອົາເງິນໄປໃຊ້ສ່ວນຕົວ.

- ສະມາຊິກສ່ວນຫລາຍບໍ່ເຊື່ອໝັ້ນໃນຄະນະກຳມະການ ມີການຕີລາຄາແບບບໍ່ດີ.
- ສະມາຊິກບໍ່ມີຄວາມສາມະຄີ ແຕກແຍກກັນເປັນຫລາຍກຸ່ມເປັນຫລາຍພວກຈົ່ມຂວັນນິນທາກັນ.
- ຄະນະກຳມະການເອົາແຕ່ຍາດຕິພີ່ນ້ອງ ແລະ ໝູ່ພວກຕົນເອງ.
- ກຳມະການບາງຄົນບໍ່ເຮັດວຽກຊ່ວຍໝູ່

*ຖ້າຫາກວ່າກຸ່ມໃດຢາກປະສົບຜົນສຳເລັດໃນໂຄງການທີ່ຈັບງານ ແລະ ມີແມ່ແບບໃນການພັດທະນາທີ່ມີຊີວິດສົດໃສ ແລະ ມີອະນາຄົດໃນເມືອໜ້າ ແລະ ຫລຸດຜ່ອນຄວາມທຸກຍາກໄດ້ເທື່ອລະກ້າວນັ້ນແມ່ນຕ້ອງໄດ້ປະຕິບັດຕາມຫລັກການທີ່ກ່າວມາຕາມຂ້າງເທິງນັ້ນຈຶ່ງຈະປະສົບຄວາມສຳເລັດໃນອຸດົມການ. ສະນັ້ນ,ພວກຕ້ອງເປັນເຈົ້າການນຳກັນເພື່ອໃຫ້ໄດ້ຕາມຈຸດປະສົງແລະ ເປົ້າໝາຍທີ່ຄາດຫວັງເອົາໄວ້.*

## ຄຳຖາມເຈາະຈົ້ມທວນຄືນບົດຮຽນ.

1. ບົດບາດຂອງການທ້ອນເງິນຂອງຊາວບ້ານແມ່ນເພື່ອຫລຸດຜ່ອນຄວາມທຸກຈົນແມ່ນບໍ?
2. ກຸ່ມທ້ອນເງິນແມ່ນເປັນການລວມຕົວກັນຂອງກຸ່ມຄົນທີ່ມີຈຸດປະສົງອັນດຽວກັນແມ່ນບໍ?
3. ປະໂຫຍດຂອງກຸ່ມທ້ອນເງິນມີຄືແນວໃດແດ່ທີ່ເຈົ້າຮູ້ໃຫ້ບອກມາຈັກ 3 ຕົວຢ່າງ ?
4. ທຸກຄົນເຂົ້າເປັນສະມາຊິກໂດຍຄວາມສະໝັກໃຈໂດຍຄວາມສະໝັກໃຈບໍ ຫລືຖືກບັງຄັບບໍ?
5. ຜູ້ທີ່ຈະເປັນສະມາຊິກກຸ່ມເງິນທ້ອນແມ່ນເອົາແຕ່ຜູ້ຮັ່ງໆບໍຈຶ່ງເຂົ້າມາເປັນສະມາຊິກໄດ້ ?
6. ຄົນທີ່ຫລິ້ນການພະນັນ ແລະ ຕິດຢາເສບຕິດຈະຮັບເອົາເຂົ້າເປັນສະມາຊິກບໍ ?
7. ຈະຮັບສະມາຊິກກຸ່ມສະເພາະແຕ່ຜູ້ຍິງເທົ່ານັ້ນບໍ ? ຫລືວ່າທັງຊາຍ ແລະ ທັງຍິງ ?
8. ຄົນເຮືອນດຽວກັນສາມາດເປັນສະມາຊິກກຸ່ມເງິນທ້ອນກໍ່ໄດ້ບໍ ?
9. ຄະນະກຳມະການກຸ່ມຈະເອົາຜູ້ແນວໃດ ?
10. ຄະນະກຳມະການກຸ່ມທີ່ໝົດອາຍຸເຮັດວຽກແລ້ວສາມາດຖືກຂັດເລືອກເປັນຄະນະກຳມະການອີກຊຸດໃໝ່ໄດ້ບໍ ?
11. ສະມາຊິກຈະມາທ້ອນເງິນກັບກຳມະການດ້ວຍຕົນເອງບໍ ? ຫລືໃຫ້ຄະນະກຳມະການໄປເລາະເກັບເງິນທ້ອນນຳສະມາຊິກທຸກຄົນບໍ?
12. ສະມາຊິກມາຝາກເງິນບໍ່ທັນມື້ກຳນົດໄວ້ຈະຈ່າຍຢ້ອນຫລັງຄືນໄດ້ບໍ? ຫລືວ່າຕື່ມໃສ່ເລີຍໂລດ ?
13. ສະມາຊິກຄົນໃດຄົນນຶ່ງຕ້ອງການຖອນເງິນຂອງຕົນບາງຈຳນວນຈະໄດ້ບໍ ?
14. ສະມາຊິກກູ້ຢືມເງິນໄປເຮັດກິດຈະກຳໃດແດ່ຈຶ່ງອະນຸມັດໃຫ້ ?
15. ສະມາຊິກກູ້ຢືມເງິນໄປຫລິ້ນການພະນັນ ຫລືກູ້ຢືມໄປກິນເຫລົ້າກໍ່ໄດ້ບໍ ?
16. ທຸກໆເດືອນກຸ່ມຈະມີການປະຊຸມກັນບໍ ?
17. ສະມາຊິກທີ່ຂາດປະຊຸມເລື້ອຍໆຄວນເຮັດແນວໃດ ?
18. ກົດລະບຽບຂອງກຸ່ມສາມາດປ່ຽນແປງໄດ້ຕາມເງື່ອນໄຂທີ່ເໝາະສົມບໍ ?
19. ສະມາຊິກບໍ່ສົ່ງຄືນເງິນກູ້ ແລະ ດອກເບັ້ຽຕາມກຳນົດເວລາທີ່ໄດ້ບັນທຶກໄວ້ຈະເຮັດໃຫ້ກຸ່ມເປັນແນວໃດ ?
20. ກຳມະການເອົາເງິນໄປໃຊ້ສ່ວນຕົວຈະເປັນແນວໃດ?

21. ຄະນະກຳມະການເອົາແຕ່ຍາດຕິພີ່ນ້ອງ ແລະ ພັກພວກຂອງຕົນເອງ ຈະເຮັດໃຫ້ກຸ່ມເປັນແນວໃດ ?
22. ຄະນະກຳມະການບາງຄົນບໍ່ເຮັດວຽກຊ່ວຍໝູ່ກຸ່ມຈະເປັນແນວໃດ ?
23. ຖ້າວ່າການເງິນຂອງກຸ່ມບໍ່ຈະແຈ້ງ ແລະ ບໍ່ໂປ່ງໃສ ກຸ່ມຈະເປັນແນວໃດ ?
24. ຖ້າວ່າເຈົ້າຢືມເງິນຂອງກຸ່ມເຈົ້າຄິດວ່າເຈົ້າຈະເອົາໄປເຮັດຫຍັງ ?
25. ຖ້າວ່າເຈົ້າຢືມເງິນຈຳນວນ 200.000 ກີບ ແລະ ຄິດໄລ່ດອກເບັ້ຽ 3% ຕໍ່ 1 ເດືອນເຈົ້າຈະໃຫ້ດອກເບັ້ຍ ກຸ່ມທໍ່ໃດ ?
26. ເຈົ້າຄິດວ່າການເຮັດກຸ່ມທ້ອນເງິນມັນມີຜົນດີສຳຫລັບເຈົ້າຄືແນວໃດ ?
27. ເຈົ້າຄິດວ່າການເຮັດກຸ່ມທ້ອນເງິນມັນບໍ່ມີຜົນດີສຳຫລັບເຈົ້າຄືແນວໃດ ?
28. ເປັນຫຍັງຈິ່ງເກັບດອກເບັ້ຽ ?
29. ຖ້າວ່າເງິນດອກເບັ້ຽໝູນໄດ້ຫລາຍ ກອງທຶນບ້ານຂອງພວກເຮົາຈະເປັນແນວໃດ ?
30. ຖ້າວ່າເກັບທຶນ ແລະ ດອກເບັ້ຽບໍ່ໄດ້ຕາມກຳນົດເວລາ ແລະ ບໍ່ສົ່ງຄືນ ກອງທຶນຂອງພວກເຮົາຈະເປັນແນວໃດ ?
31. ຖ້າວ່າກອງທຶນຂອງພວກເຈົ້າຫາກຂະຫຍາຍດີພວກເຈົ້າຄິດວ່າຈະເອົາໄປເຮັດຫຍັງ ? ຈະປັນຜົນບໍ ? .
ຫລືວ່າເອົາໄປຊື້ງົວເຜົາມາຊຸມເຫລົ້າກັນບໍ ?
32. ເປັນຫຍັງເຮົາຈິ່ງມີການເກັບກູ້ເງິນຄືນ ? ຖ້າບໍ່ເກັບຄືນກຸ່ມຈະເປັນແນວໃດ ?
33. ບັນຊີການເງິນຂອງພວກເຮົາຄວນເປັນບັນຊີທີ່ເປີດເຜີຍບໍ? ແລະ ໃຜໆກໍສາມາດກວດກາໄດ້ບໍ ?
34. ພວກເຮົາຄິດວ່າ ແຕ່ລະກຸ່ມ ຫລື ແຕ່ລະບ້ານຄວນແລກປ່ຽນບົດຮຽນນຳກັນບໍ ? ຫລືວ່າຢູ່ໃຜຢູ່ມັນບໍ?

## ປະເມີນຄວາມເຂົ້າໃຈຂອງນັກຝຶກອົບຮົມ ໃນ ຄັ້ງ ວັນທີ ...../..../......

1 ໃຫ້ນັກຮຽນປະເມີນຄວາມເຂົ້າໃຈຂອງຕົນເອງໃສ່ໃນຫ້ອງຕາຕະລາງຂ້າງລຸ່ມນີ້:

| ຢູ່ໃນຫ້ອງຮຽນ ( ອາຈານຖາມ) | ຄວາມເຂົ້າໃຈ | ໃຫ້ໝາຍ (v) |
|---|---|---|
| **ຄຳຖາມ**: ທ່ານມີຄວາມເຂົ້າໃຈສໍາໃດ? ເມື່ອອາຈານອະທິບາຍບົດຮຽນພາກທິດສະດີ ກ່ຽວກັບກຸ່ມທ້ອນເງິນ ( ໃຫ້ໝາຍ V ໃສ່ຫ້ອງສຸດທ້າຍຕາມຄວາມເຂົ້າໃຈຂອງຕົນເອງຕໍ່ບົດຮຽນດັ່ງກ່າວ). | - ເຂົ້າໃຈດີເລີດ 100% | |
| | - ເຂົ້າໃຈດີ 80% | |
| | - ເຂົ້າໃຈປານກາງ 60% | |
| | - ພໍເຂົ້າໃຈ 50% | |
| | - ບໍ່ເຂົ້າໃຈເລີຍ 0 % | |

2 ໃຫ້ນັກຮຽນປະເມີນຄວາມເຂົ້າໃຈຂອງຕົນເອງໃສ່ໃນຫ້ອງຕາຕະລາງຂ້າງລຸ່ມນີ້:

| ຢູ່ໃນຫ້ອງຮຽນ ( ອາຈານຖາມ) | ຄວາມເຂົ້າໃຈ | ໃຫ້ໝາຍ (v) |
|---|---|---|
| **ຄຳຖາມ**: ທ່ານມີຄວາມເຂົ້າໃຈສໍາໃດ? ເມື່ອອາຈານອະທິບາຍບົດຮຽນ ພາກປະຕິບັດຕົວຈິງ ຫລື ວິທີຄິດໄລ່ເລກໃນການປະກອບການກິດຈະກຳກຸ່ມທ້ອນເງິນ ( ໃຫ້ໝາຍ V ໃສ່ຫ້ອງສຸດທ້າຍຕາມຄວາມເຂົ້າໃຈຂອງຕົນເອງຕໍ່ບົດຮຽນດັ່ງກ່າວ). | - ເຂົ້າໃຈດີເລີດ 100% | |
| | - ເຂົ້າໃຈດີ 80% | |
| | - ເຂົ້າໃຈປານກາງ 60% | |
| | - ພໍເຂົ້າໃຈ 50% | |
| | - ບໍ່ເຂົ້າໃຈເລີຍ 0 % | |

3 ໃຫ້ນັກຮຽນປະເມີນຄວາມເຂົ້າໃຈຂອງຕົນເອງໃສ່ໃນຫ້ອງຕາຕະລາງຂ້າງລຸ່ມນີ້:

| ຢູ່ໃນຫ້ອງຮຽນ ( ອາຈານຖາມ) | ຄວາມເຂົ້າໃຈ | ໃຫ້ໝາຍ (v) |
|---|---|---|
| **ຄຳຖາມ**: ທ່ານມີຄວາມຮູ້ສຶກແນວໃດ? ເມື່ອພວກທ່ານໄດ້ຮຽນຮູ້ວິຊາການທ້ອນເງິນຂອງຊາວບ້ານແລ້ວ, ມັນເປັນປະໂຫຍດຕໍ່ທ່ານ ແລະ ຕໍ່ສັງຄົມຫລາຍປານໃດ? ( ໃຫ້ໝາຍ V ໃສ່ຫ້ອງສຸດທ້າຍຕາມຄວາມເຂົ້າໃຈຂອງຕົນເອງຕໍ່ບົດຮຽນດັ່ງກ່າວ). | - ຫລາຍທີ່ສຸດ 100% | |
| | - ຫລາຍ 80% | |
| | - ຫລາຍປານກາງ 60% | |
| | - ທຳມະດາ 50% | |
| | - ບໍ່ມີປະໂຫຍດ 0 % | |

# ພາກເອກະສານແນບທ້າຍ:

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ...................

ບ້ານ................. ເລກທີ........../

ກຸ່ມຫ້ອນເງິນໜ່ວຍ............... ວັນທີ........../...../

# ໃບສະເໜີ

**ຮຽນ:** ທ່ານເຈົ້າເມືອງ ເມືອງ .......................................................

( ໂດຍຜ່ານຫົວໜ້າກຸ່ມບ້ານ )

**ເລື້ອງ:** ຂໍອະນຸມັດສ້າງຕັ້ງກຸ່ມເງິນຫ້ອນຂອງໜ່ວຍຜະລິດຕະພັນ..........................

- ອີງໃສ່ແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ໃນການສົ່ງເສີມ ແລະ ສະສົມທຶນຮອນ ເພື່ອການພັດທະນາເສດຖະກິດ-ສັງຄົມ ຢູ່ຂັ້ນພື້ນຖານຂອງປະຊາຊົນ.
- ອີງຕາມວຽກງານຜັນຂະຫຍາຍແຜນງານລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ການເຕີບໂຕໄປກັບການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນບ້ານ.
- ອີງໃສ່ກອງປະຊຸມຂອງປະຊາຊົນພາຍໃນບ້ານຄັ້ງວັນທີ ....../......./.............ກ່ຽວກັບການປຶກສາຫາລື ການສ້າງຕັ້ງກຸ່ຫ້ອນເງິນຂອງໜ່ວຍ..................................

ນາຍບ້ານ ບ້ານ: ......................... ເມືອງ...............................ແຂວງ...............................

ຂໍຮຽນສະເໜີມາຍັງທ່ານເຈົ້າເມືອງເພື່ອອະນຸມັດສ້າງຕັ້ງກຸ່ມຫ້ອນເງິນຂອງໜ່ວຍ....................... ຂອງບ້ານ ຢ່າງເປັນທາງການ.

ດັ່ງນັ້ນ, ຈື່ງຮຽນສະເໜີມາຍັງທ່ານເຈົ້າເມືອງ ເພື່ອຄົ້ນຄວ້າພິຈາລະນາ ແລະ ອະນຸມັດໃນການສ້າງຕັ້ງກຸ່ມຫ້ອນເງິນຂອງໜ່ວຍຜະລິດຕະພັນຕ່າງໆຂອງບ້ານພວກຂ້າພະເຈົ້າຕາມເຫັນສົມຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຢັ້ງຢືນຈາກກຸ່ມບ້ານ ...................... ໜ່ວຍຜະລິດຕະພັນ...................

ຢັ້ງຢືນຈາກນາຍບ້ານໆ ..................... ເຈົ້າເມືອງເມືອງ.......................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ.............................

ເມືອງ ...........................                                        ເລກທີ............/.......

ບ້ານ..................................                                        ວັນທີ......../......../........

ໜ່ວຍຜະລິດຕະພັນ........................

## ຂໍ້ຕົກລົງຂອງທ່ານເຈົ້າເມືອງ

## ວ່າດ້ວຍການອະນຸມັດແຕ່ງຕັ້ງກຸ່ມທ້ອນເງິນຂັ້ນບ້ານ

- ອີງໃສ່ແນວທາງຂອງພັກ ແລະ ນະໂຍບາຍຂອງລັດຖະບານ ໃນການສົ່ງເສີມ ແລະ ສະສົມທຶນຮອນເພື່ອ ການພັດທະນາເສດຖະກິດ-ສັງຄົມ ຢູ່ຂັ້ນພື້ນຖານຂອງປະຊາຊົນ.
- ອີງຕາມວຽກງານຜັນຂະຫຍາຍແຜນງານລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ການເຕີບໂຕໄປ ສູ່ການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນບ້ານ.
- ອີງຕາມໃບສະເໜີຂໍອະນຸມັດສ້າງຕັ້ງກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຕ່າງໆ ຂອງບ້ານ.................... .ສະບັບເລກທີ................/.................ລົງວັນທີ................./.........../................

ເພື່ອເຮັດໃຫ້ບັນລຸຕາມຈຸດປະສົງ ແລະ ສຳເລັດຕາມຄາດໝາຍໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃຫ້ຫລຸດພົ້ນອອກໄປເທື່ອລະກ້າວ.

**ເຈົ້າເມືອງ ເມືອງ ........................................ຕົກລົງ**

<u>ມາດຕາ 1:</u>

ຕົກລົງອະນຸມັດສ້າງຕັ້ງກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຕ່າງໆຂອງບ້ານ.................ເມືອງ .....................

<u>ມາດຕາ 2</u>

ອີງການຈັດຕັ້ງພັກ-ລັດ, ອຳນາດການປົກຄອງທຸກຂັ້ນຕະຫລອດຮອດພໍ່ແມ່ປະຊາຊົນທີ່ກ່ຽວຂ້ອງ ຈົ່ງໄດ້ຮັບຮູ້ ແລະ ອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານຮອບດ້ານຂອງຄະນະ ບໍລິຫານກຸ່ມທ້ອນເງິນໜ່ວຍຜະລິດຕະພັນຕ່າງໆຂອງບ້ານດັ່ງກ່າວ ເພື່ອສຸມໃສ່ເຮັດໃຫ້ກຸ່ມມີ ຄວາມໝັ້ນຄົງ ແລະ ເຕີບໂຕເຂັ້ມແຂງ.

<u>ມາດຕາ3:</u>

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າເມືອງ ເມືອງ...................**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ............................

ເມືອງ .......................... ເລກທີ............/.......

ບ້ານ................................. ວັນທີ......../......../........

ໜ່ວຍຜະລິດຕະພັນ.......................

# ຂໍ້ຕົກລົງແຕ່ງຕັ້ງ

## ຄະນະບໍລິຫານງານກຸ່ມ ແລະ ຄະນະທີ່ປຶກສາ-ກວດກາ ກຸ່ມທ້ອນເງິນ

## ໜ່ວຍຜະລິດຕະພັນຕ່າງໆ ຂອງບ້ານ........................

- ອີງຕາມຂໍ້ຕົກລົງຂອງທ່ານເຈົ້າເມືອງ ວ່າດ້ວຍການອະນຸມັດແຕ່ງຕັ້ງກຸ່ມທ້ອນເງິນຂອງໜ່ວຍ ຜະລິດ ຕະພັນຂອງບ້ານ...........................ສະບັບເລກທີ............/...........ລົງວັນທີ......../......../..... . -
- ອີງໃສ່ກອງປະຊຸມຂອງກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນ..................ຂອງບ້ານຄັ້ງ ວັນທີ... ........./......../........ກ່ຽວກັບການຄັດເລືອກຄະນະບໍລິຫານງານກຸ່ມ ແລະ ຄະນະທີ່ປຶກສາ-ກວດກາ ຂອງກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຂອງບ້ານ.

ນາຍບ້ານ..........................ເມືອງ.........................ແຂວງ.......................ຕົກລົງແຕ່ງຕັ້ງ:

**<u>ມາດຕາ 01:</u>** ຄະນະບໍລິຫານງານກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນ...................ຂອງບ້ານ:

1- ທ່ານ................................ເປັນປະທານກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນ........ .

2- ທ່ານ...........................ເປັນຮອງປະທານກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນ....... .

3 - ທ່ານ...........................ເປັນກຳມະການກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຜູ້ທີ 1

4 - ທ່ານ ......................... ເປັນກຳມະການກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຜູ້ທີ 2

5 - ທ່ານ.........................ເປັນກຳມະການກຸ່ມທ້ອນເງິນຂອງໜ່ວຍຜະລິດຕະພັນຜູ້ທີ 3

**<u>ມາດຕາ 02:</u>** ຄະນະທີ່ປຶກສາ- ກວດກາກຸ່ມ ທ້ອນເງິນຂອງໜ່ວຍຜະລິດຕະພັນ...................ຂອງບ້ານ

1 - ທ່ານ...............................ເປັນຫົວໜ້າ

2 - ທ່ານ...............................ເປັນຮອງ

3 - ທ່ານ...............................ເປັນກຳມະການ

4 - ທ່ານ .............................. ເປັນກຳມະການ

**<u>ມາດຕາ 03:</u>** ຄະນະບໍລິຫານງານກຸ່ມ ແລະ ຄະນະທີ່ປຶກສາກວດກາທີ່ໄດ້ຖືກແຕ່ງຕັ້ງດັ່ງທີ່ກ່າວມາຂ້າງເທິງນັ້ນມີໜ້າ ທີ່ຮັບຜິດຊອບຕາມພາລະບົດບາດທີ່ໄດ້ກຳນົດໄວ້ໃນກອງປະຊຸມຂອງກຸ່ມທ້ອນເງິນຂອງບ້ານ.

**<u>ມາດຕາ 04:</u>** ຂໍ້ຕົກລົງແຕ່ງຕັ້ງສະບັບນີ້ມີຜົນບັງຄັບໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**<u>ນາຍບ້ານ</u>**

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ...................

ກຸ່ມທ້ອນເງິນບ້ານ.................

**ໃບສະເໜີຂໍກູ້ຢືມເງິນ**

ຮຽນ: ທ່ານປະທານກຸ່ມທ້ອນເງິນຂັ້ນບ້ານ

ຂ້າພະເຈົ້າ.....................................ໃນນາມເປັນສະມາຊິກຂອງກຸ່ມທອ້ນເງິນຂອງບ້ານ,ນຳເບີສະມາຊິກເລກທີ: .........ຮຽນສະເໜີມາຍັງກຳມະການກຸ່ມທ້ອນເງິນ ເພື່ອຂໍກູ້ຢືມເງິນຈຳນວນ........................ກີບ, ຈຳນວນເງິນເປັນຕົວໜັງສື....................................................

ຈຸດປະສົ່ງຂອງການກູ້ຢືມເພື່ອ: ...............................................

ໄລຍະເວລາຂໍກູ້ຢືມແມ່ນ..........ເດືອນ,ກຳນົດສົ່ງຄືນວັນທີ........./......./..........

ຂ້າພະເຈົ້າຂໍສັນຍາວ່າ ຈະຖອກດອກເບັ້ຽຄືນໃຫ້ແກ່ກຸ່ມທຸໆເດືອນ ແລະສົ່ງຕົ້ນທືນຄືນທັງໝົດຕາມກຳນົດເວລາ, ໃນກໍລະນີທີ່ຂ້າພະເຈົ້າບໍ່ສົ່ງພ້ອມດ້ວຍດອກເບັ້ຽທັນຕາມກຳນົດເວລາ ຂ້າພະເຈົ້າຂໍປະຕິບັດວິໄນຕາມທີ່ກຳນົດໄວ້ໃນກົດລະບຽບຂອງກຸ່ມທຸກປະການ.

ດັ່ງນັ້ນ,ຈິ່ງຮຽນສະເໜີມາຍັງຄະນະບໍລິຫານງານກຸ່ມເພື່ອຄົ້ນຄ້ວາແລະພິຈາລະນາຕາມທີ່ເຫັນສົມຄວນດ້ວຍ.

ທີ່ບ້ານ.........................ວັນທີ,......./......./......

**<u>ເຫັນດີໂດຍຫົວໜ້າກຸ່ມຜະລິດ</u>** **<u>ຮັບຮູ້ໂດຍຫົວໜ້າຄອບຄົວ</u>** **<u>ຜູ້ສະເໜີຂໍກູ້ຢືມ</u>**

**ຢັ້ງຢືນໂດຍ**

**ປະທານກຸ່ມທ້ອນເງິນ**

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ..................

ກຸ່ມທ້ອນເງິນບ້ານ.................

## ໜັງສືສັນຍາກູ້ຢືມເງິນ

- ອີງຕາມໃບສະເໜີຂໍກູ້ຢືມເງິນຂອງທ່ານ....................ເລກທີ........... ລົງວັນທີ..........
- ອີງຕາມການຄົ້ນຄວ້າພິຈາລະນາ ແລະ ເຫັນດີຕົກລົງຂອງຄະນະບໍລິຫານກຸ່ມທ້ອນເງິນຢູ່ໃນກອງປະຊຸມຄັ້ງວັນທີ.....ທັງສອງຝ່າຍລະຫວ່າງກຸ່ມທ້ອນເງິນບ້ານ ແລະ ຜູ້ກູ້ຢືມ ໄດ້ສ້າງສັນຍາປ່ອຍເງິນກູ້ສະບັບນີ້ຂຶ້ນຮ່ວມກັນດັ່ງມີເນື້ອໃນຕໍ່ໄປນີ້:

1. ກຸ່ມທ້ອນເງິນບ້ານໄດ້ຕົກລົງປ່ອຍເງິນກູ້ໃຫ້ທ່ານ.........................................ສະມາຊິກເລກທີ:...
2. ຈຳນວນເງິນທີ່ກຸ່ມອະນຸມັດໃຫ້ກູ້ຢືມໃນຄັ້ງນີ້ແມ່ນ...........................ກີບ,ຂຽນເປັນໂຕໜັງສື:............
3. ຈຸດປະສົງຂອງການກູ້ຄັ້ງນີ້ແມ່ນ.........................................................................................
4. ກຳນົດເວລາໃຫ້ກູ້ແມ່ນ............ເດືອນ,ເຊີ່ງນັບແຕ່ວັນທີ. ......./......./.......... ເປັນຕົ້ນໄປ
5. ອັດຕາດອກເບ້ຍແມ່ນ ......% ຕໍ່ເດືອນ ,ຜູ້ກູ້ຢືມຕ້ອງສຳລະດອກເບ້ຍໃຫ້ແກ່ກຸ່ມທຸກໆເດືອນ.
6. ກຳນົດມື້ສຸດທ້າຍສົ່ງຕົ້ນທຶນ ພ້ອມດວ້ຍດອກເບັ້ຽງວດສຸດທ້າຍແມ່ນວັນທີ ......../....../.....
   ດັ່ງນັ້ນຈິ່ງເຮັດສັນຍາສະບັບນີ້ໄວ້ເປັນຫຼັກຖານ.

ທີ່ບ້ານ.........................ວັນທີ,......./......./......

**ລາຍເຊັນນາຍຄັງຜູ້ຈ່າຍເງິນ** **ລາຍເຊັນຜູ້ກູ້ຢືມເງິນ**

ພະຍານຢັ້ງຢືນ:

ປະທານກຸ່ມ...............................................

ຮອງປະທານກຸ່ມ..........................................

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ..................

ກຸ່ມທ້ອນເງິນບ້ານ................

# **ໃບສະໝັກ**

## **ຂໍເຂົ້າເປັນສະມາຊິກກຸ່ມທ້ອນເງິນ**

**ຮຽນ:** ທ່ານຫົວໜ້າກຸ່ມທ້ອນເງິນຂັ້ນບ້ານ,ບ້ານ........................................

. (ໂດຍຜ່ານອຳນາດການປົກຄອງຂອງບ້ານ)

ຂ້າພະເຈົ້າ..............................................ອາຍຸ .............ປີ, ປະຈຸບັນຢູ່ບ້ານ.........................

ໜ່ວຍ...........................ເມືອງ....................................ແຂວງ.............................................

ຖືສະມະໂນຄົວເລກທີ........................ຂໍສະໝັກເຂົ້າເປັນສະມາຊິກກຸ່ມທ້ອນເງິນຂອງບ້ານ,

ຂ້າພະເຈົ້າຂໍປະຕິຍານຕົນວ່າ:

1. ຂໍປະຕິບັດຕາມກົດລະບຽບຂອງກຸ່ມທ້ອນເງິນບ້ານທຸກປະການ,ຈະເຂົ້າຮ່ວມທຸກຂະບວນການຂອງກຸ່ມ ແລະ ຮ່ວມມືໃນການພັດທະນາກຸ່ມໃຫ້ນັບມື້ເຕີບໂຕຂຶ້ນເລື້ອຍໆ.
2. ຈະທ້ອນເງິນໄວ້ນຳກຸ່ມເດືອນລະ.................................ກີບ ແລະ ຈະທ້ອນເງິນຂອງຕົນຢ່າງປົກກະຕິ ສະໝ່ຳສະເໝີຕາມລະບຽບການຂອງກຸ່ມ.
3. ໃນກໍລະນີ ທີ່ຂ້າພະເຈົ້າຫາກບໍ່ປະຕິບັດຕາມກົດລະບຽບຂອງກຸ່ມ ຂໍໃຫ້ຄະນະບໍລິຫານງານກຸ່ມປະຕິບັດວິໄນ ທີ່ໄດ້ກຳນົດເອົາໄວ້ຢ່າງເຄັ່ງຄັດ.

ຂ້າພະເຈົ້າຂໍຢືນຢັນວ່າຂໍ້ຄວາມທັງໝົດ ທີ່ໄດ້ມາຂ້າງເທິງນັ້ນ ແມ່ນຄວາມຈິງທຸກປະການ ແລະ ຫວັງຢ່າງຍິ່ງວ່າທ່ານຄົງຈະພິຈາລະນາຮັບເອົາຂ້າພະເຈົ້າເຂົ້າເປັນສະມາຊິກຂອງກຸ່ມທ້ອນເງິນຂອງບ້ານດ້ວຍ.

ທີ່ບ້ານ.........................ວັນທີ......../......./...............

**<u>ເຊັນຢັ້ງຢືນຈາກນາຍບ້ານ</u>** **<u>ລາຍເຊັນຜູ້ສະໝັກ</u>**